D117

# ວິທີປູກ
# ໝາກຂາມຫວານ, ໝາກມ່ວງ ໝາກຂຽບ ແລະ ໝາກລຳໄຍ



C048

ຈັດພິມໂດຍ
ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ສປປ.ລາວ
ຮ່ວມມືກັບ
ອົງການອາຫານ ແລະ ການກະເສດ ສະຫະປະຊາຊາດ

# ວິທີປູກ ໝາກຂາມຫວານ, ໝາກມ່ວງ, ໝາກຂຽບ, ໝາກລຳໄຍ ແລະ ໝາກກະທັນ

ASSOCIATION FOR SENDING PICT[illegible] BO[illegible]
TO LAO CHILDREN FO JAPAN

ຈັດພິມໂດຍ
ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ສປປ.ລາວ
ຮ່ວມມືກັບ
ອົງການອາຫານແລະ ການກະເສດສະຫະປະຊາດ
ວຽງຈັນ 1994

ຮັບຜິດຊອບການພິມຈຳໜ່າຍ :
ສີວຽງແຂກ ກອນນີວົງ ແລະ ລາດຊະນີວົງ ອະມາຣາທິທາດາ

<u>ຄະນະຈັດທຳ</u>

ບຸນຊູ ຜັນທະວີໄຊ
ຮຽບຮຽງໂດຍ : ແສງເພັດ ສິມມະນີວົງ
ແຕ້ມໜ້າປົກ ຄຳເພັດ ລັດຕະນະວົງ

ອພ 55 /ສພປ.
ທບ 541 /ພຈໝປ.
ພິມທີ່ວິສາຫະກິດການພິມຈຳໜ່າຍສຶກສາ
ຈຳນວນ 2.000 ຫົວ
ຂະໜາດ 14,5×20 ຊມ.

# ຄຳນຳ

ເພື່ອເປັນການສົ່ງເສີມວຽກງານກະສິກຳແລະຜະລິດໃຫ້ກາຍເປັນສິນ ຄ້າຂາຍຕາມທ້ອງຕະຫລາດຂອງລາວແລະສົ່ງອອກຂາຍຕ່າງປະເທດໂດຍໄດ້ ຮັບການອຸປະຖຳທຶນຮອນຈາກອົງການອາຫານແລະການກະເສດປະຈຳລາວ, ສຳນັກພິມແລະຈຳຫນ່າຍປຶ້ມແຫ່ງລັດ ສ.ປ.ປ.ລາວ(ກະຊວງຖະແຫລງຂ່າວແລະວັດທະນະທຳ)ຮ່ວມກັບກົມປູກຝັງແລະສົ່ງເສີມການກະເສດ(ກະຊວງກະສິ ກຳປ່າໄມ້)ຈຶ່ງໄດ້ຈັດພິມປຶ້ມຫົວນີ້ອອກມາຮັບໃຊ້ບັນດາທ່ານ. ໂດຍໄດ້ຮັບທຶນ ຊ່ວຍເຫລືອຈາກອົງການອາຫານແລະການກະເສດປະຈຳລາວເຊິ່ງແມ່ນທ່ານ ດຣ ຝຣັ່ງຊິດ ມຸດຕາປາ ເປັນຜູ້ຕາງຫນ້າອົງການອາຫານແລະການກະເສດປະຈຳລາວໃຫ້ການດູແລຢ່າງໃກ້ຊິດ.

ປຶ້ມຫົວນີ້ເປັນຄູ່ມືການປູກຝັງທີ່ໄດ້ນຳຄວາມຮູ້ກ່ຽວກັບວິທີປູກຫມາກ ຂາມຫວານ, ຫມາກມ່ວງ, ຫມາກຂຽບ, ຫມາກລຳໄຍແລະວິທີປູກຫມາກກະທັນ ເຊິ່ງຈະນຳຜົນປະໂຫຍດອັນຫລວງຫລາຍມາຍັງທ່ານທີ່ມີຄວາມສົນໃຈໃນການປູກຕົ້ນໄມ້ກິນຫມາກເຊິ່ງມີຈຸດປະສົງຢາກນຳຜົນຜະລິດເປັນສິນຄ້າ ຫລືຢ່າງຫນ້ອຍ ກໍ່ຈະນຳຜົນຜະລິດຮັບໃຊ້ຊີວິດການເປັນຢູ່ໃນຄອບຄົວຂອງທ່ານເປັນຢ່າງດີ.

ຍ້ອນວ່າເປັນເທື່ອທຳອິດໃນການຈັດພິມປຶ້ມຫົວນີ້ອອກມາຮັບໃຊ້ບັນດາ ທ່ານສະນັ້ນຈຶ່ງຫວັງວ່າຈະໄດ້ຮັບຄຳຄິດຄຳເຫັນຈາກທ່ານຜູ້ຊົມໃຊ້, ຫາກທ່ານ ມີຄວາມເຫັນປະການໃດ ກະລຸນາສົ່ງຂ່າວໄປຍັງສຳນັກພິມ ແລະຈຳຫນ່າຍ ປຶ້ມແຫ່ງລັດ ຕູ້ ປ.ນ. 1300 ວຽງຈັນ ສ.ປ.ປ.ລາວ ໂທລະສັບ 212106

212472,212473,212475, ແຟັກ : 856(21)215628,213082

ຂໍຂອບໃຈລ່ວງໜ້າ.

ດ້ວຍຄວາມນັບຖືແລະຮັກແພງ.

ສຳນັກພິມແລະຈຳໜ່າຍປຶ້ມແຫ່ງລັດ ສ.ປ.ປ.ລາວ

# ວິທີປູກໝາກຂາມຫວານ

<u>ຕົ້ນກຳເນີດ ແລະ ຄວາມເປັນມາຂອງໝາກຂາມຫວານ</u> :

ໝາກຂາມມີຖິ່ນກຳເນີດຢູ່ພາກໃຕ້ຂອງທະວີບອາຊີ ແລະ ປາຊີຟິກຕາເວັນອອກ. ໝາກຂາມຫວານມີຢູ່ທົ່ວໄປໃນແຂວງຕ່າງໆຂອງປະ ເທດເຮົາເຊັ່ນ : ແຂວງສະຫວັນນະເຂດ ແຂວງຈຳປາສັກ ແລະ ແຂວງອື່ນໆ ໃນປັດຈຸບັນ ຂະບວນປູກໝາກຂາມຫວານໄດ້ເລີ່ມປູກຫລາຍຢູ່ແຂວງໄຊຍະບູລີ ( ເມືອງປາກລາຍ, ບໍ່ແຕນ, ແກ່ນທ້າວ ເຫລົ່ານີ້ເປັນຕົ້ນ ).

- <u>ລັກສະນະທົ່ວໄປ</u> :

ໝາກຂາມເປັນພືດທີ່ມີໃບປະສົມ, ໃບສະຫລົ່ນໃນລະດູຮ້ອນ, ເລີ່ມປົ່ງໃບອ່ອນໃນລະດູຝົນ ພ້ອມໆກັນນັ້ນກໍ່ຈະເລີ່ມອອກດອກໃນທ້ອງເດືອນເມສາ ຫລື ພຶດສະພາ (ເດືອນ 4–5 ສາກົນ) ເລີ່ມຈັບໝາກ(ຕິດຝັກ) ໃນທ້າຍເດືອນພຶດສະພາ ແລະ ໃຊ້ເວລາປະມານ 8–10 ເດືອນຈຶ່ງ ຈະສຸກແກ່ ຊຶ່ງຈະຢູ່ໃນລະຫວ່າງທ້ອງເດືອນທັນວາເຖິງເດືອນ ກຸມພາຂອງປີຕໍ່ໄປ.

- <u>ສະພາບດິນຟ້າອາກາດ</u> :

ໝາກຂາມຫວານສາມາດຈະເລີນເຕີບໂຕໄດ້ດີໃນດິນທຸກປະ ເພດ

ເຊັ່ນ ດິນໜຽວລ້ວນ, ດິນຊາຍລ້ວນ, ດິນຫີນແຮ່. ແຕ່ວ່າດິນທີ່ ເໝາະສົມສຳລັບການປູກພືດຊະນິດນີ້ ແມ່ນເປັນດິນລ້ວນ ຫລື ດິນຊາຍແກມດິນ. ທີ່ສາມາດລະບາຍນ້ຳໄດ້ດີ, ເປັນດິນທີ່ມີຄວາມອຸດົມສົມບູນສູງພໍສົມ ຄວນ ໂດຍສະເພາະຄວນເປັນດິນທີ່ມີທາດ ໂປຕັສຊຽມ ( K ) ສູງພຽງພໍ. ສະຖານທີ່ປູກແມ່ນເຂດມີຝົນຕົກຫລາຍພໍສົມຄວນ ແລະ ທ້າຍລະດູຝົນຄວນ ຈະຕ້ອງຢູ່ໃນໄລຍະຝັກໝາກຂາມໃກ້ຈະແກ່. ເພາະວ່ານ້ຳຝົນແມ່ນສາຍເຫດນຶ່ງທີ່ເຮັດໃຫ້ຄຸນນະພາບຂອງໝາກຂາມທີ່ສຸກແກ່ນັ້ນຕົກຕ່ຳ. ໝາກຂາມຫວານເປັນພືດທີ່ມັກອາກາດຮ້ອນ ປົກກະຕິມັກແສງແດດຫລາຍກ່ວາຮົ່ມ , ດັ່ງນັ້ນ ຄວນປູກໃນສະຖານທີ່ທີ່ມີແສງແດດຢ່າງພຽງພໍ ເພາະວ່າຕົ້ນໄມ້ປະເພດນີ້ແມ່ນປ່ຽນໃບກ່ອນອອກດອກ.

ສາຍເຫດທີ່ພາໃຫ້ຄຸນນະພາບຂອງໝາກຂາມຫວານປ່ຽນແປງບໍ່ ດີສະພາບເດີມທີ່ເຄີຍຫວານມານັ້ນ ສາມາດສັງເກດໄດ້ວ່າ ດິນຂາດປະ ລິມານອິນຊີວັດຖຸ ແລະ ອະອິນຊີວັດຖຸ ເຊັ່ນທາດໂປຕັສຊຽມ ( K ) ພຽງພໍ ດັ່ງນັ້ນ ຮູ້ກັນແລ້ວວ່າ ທາດດັ່ງກ່າວນີ້ໄດ້ເພີ່ມພົນຜະລິດ ແລະ ປັບປຸງ ຄຸນນະພາບໝາກໃຫ້ດີຂຶ້ນ ເພາະວ່າຕົ້ນພືດສາມາດສ້າງແປ້ງຫວານ ແລະ ທາດຊຸ່ມໄດ້ດີ.

<u>ແນວພັນ</u> :

ໝາກຂາມຫວານຢູ່ບ້ານເຮົາ ໄດ້ມີມາແຕ່ດົນນານແລ້ວຢູ່ຕາມເຂດແຂວງຕ່າງ ໆ. ແນວພັນຈຳນວນນຶ່ງກໍ່ຖືກປະເທດໃກ້ຄຽງນຳໄປປັບປຸງຈົນກາຍເປັນພັນທ້ອງຖິ່ນຂອງເຂົາເຈົ້າ. ໃນປັດຈຸບັນຢູ່ຕາມທ້ອງຖິ່ນຕ່າງຕ່າງຂອງບ້ານເຮົາຍັງມີແນວພັນທີ່ດີຈຳນວນນຶ່ງ ແຕ່ຍັງບໍ່ມີໃຜໄດ້ຂະຫຍາຍແລະປັບປຸງໃຫ້ໄດ້ຄຸນນະພາບ. ດັ່ງນັ້ນ ຈຶ່ງມີການນິຍົມປູກໝາກຂາມ ຫວານຢ່າງກວ້າງຂວາງ ໂດຍນຳໃຊ້ແນວພັນມາຈາກຕ່າງປະເທດມາປູກເຊັ່ນ : ພັນໝື່ນຈີງ, ພັນສີທອງ, ພັນນ້ຳເຜິ້ງ, ພັນວິຊຽນ ແລະ ອື່ນ ໆ.

ການຂະຫຍາຍພັນ:

ຕາມປົກກະຕິແລ້ວການຂະຫຍາຍພັນໝາກຂາມຫວານສາມາດເຮັດໄດ້ຫລາຍວິທີ ເປັນຕົ້ນວ່າ ການກ້າແກ່ນ, ການຕອນ, ການຕໍ່ກິ່ງ, ການສຽບຍອດ. ສຳລັບການກ້າແກ່ນນັ້ນສ່ວນຫລາຍພັກຈະກາຍເປັນພັນ ໝາກຂາມສົ້ມ. ຈະມີຈຳນວນໜ້ອຍຕົ້ນທີ່ສຸດທີ່ຈະຄົງຕົວໃນສະພາບຫວານດີ ກັບຕົ້ນແມ່. ນອກຈາກນັ້ນກໍຍັງໃຊ້ເວລາດົນຈຶ່ງຈະໃຫ້ໝາກສ່ວນການ ຕອນແມ່ນມີຈຸດອ່ອນຄືບໍ່ມີຮາກແກ້ວ ແລະ ການອອກຮາກກໍຍາກຈຳນວນຮາກ ທີ່ອອກມາກໍມີຈຳນວນໜ້ອຍ. ການສຽບຍອດ ຫລື ການປຽນຍອດແມ່ນນິຍົມກັນເຮັດດ້ວຍການປຽນແນວພັນໃນຕົ້ນໃຫຍ່ໂດຍການຕັດຕົ້ນໃຫ້ແຕກກິ່ງ ງ່ານ້ອຍຂຶ້ນມາໃໝ່ແລ້ວນຳເອົາຍອດພັນທີ່ຕ້ອງການໄປປຽນກັບກິ່ງງ່າໃໝ່ນັ້ນເມື່ອຕິດດີແລ້ວກໍບຳລຸງຮັກສາໃຫ້ຈະເລີນເຕີບໂຕມາແທນຕົ້ນເດີມ ວິທີນີ້ຕົ້ນໄມ້ຈະໃຫຍ່ໄວ, ການເປັນໝາກກໍ່ໄວ (ປະມານ 2 ປີ ຫລັງຈາກ ການສຽບຍອດກໍສາມາດເປັນໝາກໄດ້).

ວິທີປະຕິບັດ:

1- ການທາມກິ່ງ: ເປັນວິທີຂະຫຍາຍພັນໝາກຂາມຫວານທີ່ນິຍົມກັນຫລາຍທີ່ສຸດ ເພາະວ່າໃຊ້ເວລາສັ້ນສາມາດຕັດໄປປູກໄດ້.

ກ. ການກ້າແກ່ນ ເພື່ອເຮັດຕົ້ນຕໍ.

ສ່ວນຫລວງຫລາຍມັກນິຍົມໃຊ້ແກ່ນໝາກຂາມສົ້ມໄປກ້າໂດຍ ແຊ່ນ້ຳໄວ້ປະມານ 1 ມື້ກ່ອນກ້າ ປັດຈຸບັນແມ່ນນິຍົມກັນແບບກ້າໃສ່ຖົງຢາງ ທີ່ມີຂະໜາດ 4 × 6 ນີ້ວ ( ຫລື 9 × 13 ຊຕມ ) ຊຶ່ງໃນຖົງບັນຈຸດ້ວຍດິນປະມານຝຸ່ນຄອກ. ໂດຍທົ່ວໄປແລ້ວແກ່ນໝາກຂາມຖ້າບໍ່ໄດ້ ຮັບຄວາມເສຍຫາຍຈາກພະຍາດ ຫລືແມງໄມ້ແລ້ວມັກຈະງອກໄດ້ດີທີ່ສຸດ ດັ່ງນັ້ນຈຶ່ງກ້າແກ່ນໃນຖົງຢາງໂດຍໃຊ້ 1-2 ແກ່ນຕໍ່ 1 ຖົງ. ໃນເມື່ອອາຍຸຂອງເບ້ຍໝາກຂາມໄດ້ 6-8 ເດືອນ ມີຂະໜາດເສັ້ນຜ່າສູນ ກາງ

0,5 ຊມ. ກໍສາມາດນຳໄປທາບກິ່ງໄດ້.

ຂ. <u>ການກະຕຽມຕົ້ນຕໍ</u>.

ການທາບກິ່ງ ມັກນິຍົມກັນເຮັດໃນລະດູຝົນເພາະວ່າບໍ່ຈຳເປັນ ຫົດນ້ຳຕົ້ນຕໍທີ່ເອົາໄປທາບກິ່ງບາງເທື່ອອາດຈະໃຊ້ຫຍຸ້ງພ້າວໃນຖົງຢາງເພາະວ່າວິທີນີ້ຈະໄດ້ຖົງທີ່ມີນ້ຳໜັກເບົາ ຮັກສາຄວາມຊຸ່ມຊື່ນໄດ້ດີ ແລະ ດິນກ່ວາດິນ, ສະດວກໃນການຂຶ້ນທາບເທິງຕົ້ນສູງ.

ໃນກໍລະນີການກ້າແກ່ນເຮັດຕົ້ນຕໍໃສ່ໜານກ້າເບັຍຄອນປະຕິ ບັດຕາມຂັ້ນຕອນດັ່ງນີ້:

- ຂຸດເອົາຕົ້ນຕໍທີ່ມີໜ້າຕ້າງໃຫຍ່ຂະໜາດ 4-8 ມມ ອອກຈາກໜານກ້າມາຕຽມໄວ້ໂດຍການຕັດແຕ່ງຮາກທີ່ຍາວກ່ວານັ້ນອອກພ້ອມກັບກິ່ງງ່າຂ້າງເທິງຂອງລຳຕົ້ນ.
- ຫຼັງຈາກນັ້ນກໍນຳເອົາຕົ້ນຕໍໃສ່ຖົງຢາງແລ້ວເອົາກາບພ້າວ ມຸ່ນ ຫຼື ແກບເກົ່າແຊ່ນ້ຳໄວ້ນັ້ນນຳມາບັນຈຸໃສ່ຖົງຢາງຢັດໃຫ້ແໜ້ນ, ລະ ວັງໃນການບັນຈຸກາບພ້າວ ຫຼືແກບນັ້ນ ພະຍາຍາມເຮັດໃຫ້ລະອຽດເພາະວ່າມັນອາດຈະກະທົບກະເທືອນເຖິງຮາກ.
- ເມື່ອບັນຈຸແກບ ແລະ ຕົ້ນຕໍໃສ່ຖົງຢາງແລ້ວກໍເອົາເຊືອກ ຟາງມັດປາກຖົງຢາງແລ້ວນຳໄປແຊ່ນ້ຳໄວ້ກ່ອນ 5-7 ວັນເພື່ອໃຫ້ຕົ້ນໄມ້ ແຂງແຮງ ແລະ ລ້ຽງເຄີຍກັບສະພາບໃນຖົງຢາງ. ຈາກນັ້ນກໍນຳຕົ້ນຕໍທີ່ບັນ ຈຸໃນຖົງຢາງໄປທາບໃສ່ກັບກິ່ງພັນດີຂອງຕົ້ນແມ່ພັນທີ່ຕ້ອງການ.

ຄ. <u>ວິທີທາບແບບສຽບຂ້າງດັດແປງ</u>.

- ຈາກຂັ້ນຕອນກະກຽມຕົ້ນຕໍເປັນທີ່ຮຽບຮ້ອຍແລ້ວກໍນຳມາ ປາດສະຫລຽງເປັນຮູບສິ່ວ ຕາມແນວຂອງເປືອກ ແລະ ແກ່ນ ຊຶ່ງມີປາກ ບາດຍາວປະມານ 2,5-3,5 ຊຕມ.ແລ້ວປາດຂ້າງຫຼັງອອກອີກ 0,5 ຊຕມປາກບາດທີ່ປາດຄວນຈະສູງຈາກຄໍຮາກ ຫຼື ຖົງຢາງປະມານ8-12 ຊຕມ

- ຄັດເລືອກກິ່ງພັນດີທີ່ແຂງແຮງຈາກຕົ້ນແມ່ພັນ ແລ້ວໃຊ້ມີດ ປາດທັງເປືອກ ແລະ ແກນແຕ່ລຸ່ມຂຶ້ນເທິງປາກບາດຍາວ 2,5-3,5ຊຕມແລ້ວປາດລັດເປືອກນອກໃຫ້ມີມູມອ່ຽງ 45 ອົງສາ.

- ຕໍ່ມາກໍ່ນຳປາກບາດຂອງຕົ້ນຕໍ່ມາຊຽບ (ຕິດ) ເຂົ້າກັບກິ່ງພັນດີ ຈັດແປງປາກບາດໃຫ້ແຈບ ແລ້ວກໍ່ໃຊ້ຢາງຄຽນໄວ້ໃຫ້ແໜ້ນ ແລະ ມັດຖົງຢາງຕົ້ນຕໍ່ຕິດກັບງ່າຫາມນັ້ນໄວ້ເພື່ອບໍ່ໃຫ້ແກວ່ງໄກວ ຫລື ເໜັງຕີງໄດ້.

- ຕິດຕາມເບິ່ງທຸກໆ 1 ຫລື 2 ອາທິດຕໍ່ຄັ້ງຫາກສັງເກດ ເຫັນວ່າເປົ້າຕົ້ນຕໍ່ນັ້ນຂາດນ້ຳກໍ່ຫົດນ້ຳຕື່ມ ຫລື ຫາກມີມົດ ແລະ ແມງໄມ້ ອື່ນໆມາກັດຢາງຄຽນ ຫລື ເປົ້າຕົ້ນຕໍ່ນັ້ນກໍໃຫ້ສ້ອມແປງ ຫລື ປ່ຽນຖ່າຍໃໝ່.

- ປະມານ 6-8 ອາທິດ ປາກບາດທັງສອງກໍ່ສ້າງເນື້ອ ເຫຍື່ອໃໝ່ຂຶ້ນມາຕິດປະສານກັນເຂົ້າເປັນເນື້ອດຽວກັນຈາກນັ້ນກໍ່ກະກຽມຕັດ ກິ່ງພັນ.

- ກ່ອນຈະຕັດແຍກອອກຈາກຕົ້ນແມ່ ຄວນຈະບາກງ່າຂອງແມ່ ພັນລຸ່ມບ່ອນຕໍ່ 5-7 ຊຕມ ໄວ້ກ່ອນ. 7-15 ວັນ ແລ້ວຈຶ່ງຕັດແຍກອອກ ມາຈາກຕົ້ນ, ພ້ອມດຽວກັນນີ້ກໍ່ຕັດແຕ່ງໃບ ແລະ ກິ່ງງ່າທີ່ບໍ່ສົມບູນອອກ ຈາກນັ້ນກໍ່ແກ້ຖົງຢາງຕົ້ນຕໍ່ນັ້ນອອກ ແລະ ນຳໄປປູກຊຳໄວ້ໃນຖົງຢາງເກັບມ້ຽນໄວ້ໃນບ່ອນຮົ່ມຈົນກ່ວາຕົ້ນໄມ້ແຂງແຮງ ແລະ ແຕກຍອດໃໝ່ແລ້ວຈຶ່ງ ນຳໄປປູກໄດ້.

ຮູບ 1 : ການຕໍ່ທາບແບບສອບຂ້າງດັດແປງ.





1. ການກະກຽມຕົ້ນຕໍເພື່ອຕໍ່ທາບ



2. ການຄັດເລືອກກິ່ງພັນດີ.



3. ນຳປາຍຍອດປະກົບໃຫ້ເຂົ້າກັບແຈບດີ ແລະ ຮອບມັດໄວ້ໃຫ້ແໜ້ນ.



4. ຕົ້ນໄມ້ພັນໃໝ່ກ່ອນ ຫຼື ຫຼັງຈາກ ຕັດອອກຈາກກິ່ງພັນດີ.

2. <u>ການຕໍ່ທາມແບບສຽບຫລົ້ມ</u> (ຮູບ 2.4)

- ນຳຕົ້ນຕໍ່ມາປາດແຕ່ລຸ່ມຂຶ້ນເທິງປາກບາດຍາວ 5-7 ຊຕມ ແລ້ວປາດອີກຂ້າງນຶ່ງໃຫ້ເປັນຮູບຫລົ້ມຍາວ 3-5 ຊຕມ.

- ຈາກນັ້ນກໍໃຊ້ມີດປາດເປືອກ ແລະ ແກນກິ່ງແມ່ພັນແຕ່ລຸ່ມ ຂຶ້ນເທິງໃຫ້ປາກບາດຍາວ 3 ຫາ 5 ຊຕມ.

- ຕໍ່ມາກໍນຳປາກບາດຂອງຕົ້ນຕໍ່ສຽບໃສ່ປາກບາດງ່າພັນ ຈັດແບ່ງໃຫ້ເນື້ອເຍື່ອຈະເລີນຢູ່ແນວດຽວກັນແລ້ວນຳໃຊ້ຢາງຄຽນໄວ້ໃຫ້ແໜ້ນ ມັດຖົງຢາງຕົ້ນຕໍ່ນັ້ນຕິດກັບກິ່ງພັນໄວ້ນຳດ້ວຍ.

- ຫລັງຈາກນັ້ນກໍເຮັດຄືວິທີທີໜຶ່ງ.

<u>ການປູກ.</u>

<u>ການກະກຽມເນື້ອທີ່ປູກ</u>: ແມ່ນອີງຕາມສະຖານທີ່, ສະພາບຄວາມອຸດົມສົມບູນຖ້າຫາກເປັນເນື້ອທີ່ບຸກເບີກໃໝ່ຈະຕ້ອງມີການໄຖດິນໃຫ້ ເລິກ ແລະເກັບຕໍ ຫລື ເສດກິ່ງງ່າອອກຈາກສະຖານທີ່ໃຫ້ໝົດ. ຈາກນັ້ນ ກໍ່ໃຫ້ຄາດດິນເພື່ອກຳຈັດຫຍ້າ ຫລື ວັດຊະພືດ ແລະ ຊ່ວຍພວນດິນໃຫ້ລະອຽດ ຈາກນັ້ນກໍຕາກດິນໄວ້ປະມານ 1-2 ອາທິດ.

ໝາກຂາມຫວານເປັນພືດທີ່ມີພຸ່ມບໍ່ສາເໝີກັນ ມີກິ່ງງ່າເກີດບໍ່ເປັນລະບຽບ. ແຕ່ລະຊະນິດແນວພັນກໍມີອັນແຕກຕ່າງ ສະນັ້ນໄລຍະປູກກໍ່ ເຊັ່ນດຽວກັນ. ແຕ່ໂດຍທົ່ວໄປແລ້ວພວກເຮົາຄວນປູກໃນໄລຍະ 10 x 10 ມ ຫລື 10 x 12 ແມັດ, ບາງກໍລະນີທີ່ເປັນແນວພັນທີ່ມີພຸ່ມນ້ອຍ, ຂ້ອນຂ້າງສະໝ່ຳສະເໝີ ແມ່ນໃຊ້ໄລຍະປູກປະມານ 8 x 8 ແມັດ ຫລື 8 x10 ແມັດ. ເຖິງຢ່າງໃດກໍຕາມ ຖ້າຫາກມີການຕັດແຕ່ງກິ່ງງ່າທີ່ດີໂດຍຕະຫຼອດເວລານັ້ນອາດຈະໃຊ້ໄລຍະປູກທີ່ແຄບກ່ວາ.

ການກະຕຽມຂຸມປູກ. ເພື່ອຢາກໃຫ້ຕົ້ນໝາກຂາມໃຫຍ່ໄວແມ່ນຂຶ້ນກັບການຕຽມຂຸມປູກທີ່ດີ ໂດຍທົ່ວໄປມັກນິຍົມກັນຂຸດຂຸມຂະໜາດ 1 ແມັດ

ກ້ອນ ( 1 × 1 × 1 ມ$^3$  ກ້ວາງ, ຍາວ, ເລິກ, ເມື່ອຂຸດດິນຂຶ້ນ ມາແລ້ວໃຫ້ປະສົມດິນກັບຝຸ່ນຄອກ ຫລື ຝຸ່ນບົ່ມ ແລະ ອາດຈະປະສົມກັບ ເສດຫຍ້າ ຫລື ເປືອກຖົ່ວຕ່າງໆ ທີ່ປະໄວ້ດົນແລ້ວກ່ອນຈະເອົາດິນປະສົມຝຸ່ນລົງນັ້ນແມ່ນໃຫ້ເອົາຝຸ່ນພົ້ນສູດ ອາຊົດ, ຟົສຟໍ, ກາລີ ( NPK ) (0,3, 0) ໃນອັດຕາ 1 ກິໂລກລາມຕໍ່ຂຸມ ຫລືໃຊ້ສູດ 15-15-15 ໃນອັດ ຕາ 0,5 ກິໂລກລາມຕໍ່ຂຸມ.

ການເອົາດິນປະສົມລົງໃນຂຸມແມ່ນໃສ່ຈົນໃຫ້ລົ້ນຂຸມສູງກ່ວາໜ້າດິນພໍປະມານເພາະຫລີກເວັ້ນການຍຸບຂອງດິນເວລາຝົນຕົກ ແລະ ຈະເປັນສາເຫດໃຫ້ຮາກຕົ້ນໄມ້ເນົ່າໃນເມື່ອມີນ້ຳຂັງ ຈາກນັ້ນຈຶ່ງນຳເອົາຕົ້ນທີ່ໄດ້ຈາກການທາມກິ່ງ ລົງປູກຢູ່ກາງຂຸມ ໃຫ້ຮອຍປາກບາດຈາກການທາມນັ້ນຢູ່ ສູງກ່ວາລະດັບໜ້າດິນປູກພຽງເລັກນ້ອຍ, ຢຽບດິນໃຫ້ແໜ້ນ ໃຊ້ໄມ້ປັກ ຫລັກເພື່ອພາລຳຕົ້ນທີ່ປູກໃໝ່ຫລີກເວັ້ນການຫັກລົ້ມທີ່ກະທົບຈາກລົມ. ຫລັງຈາກປູກແລ້ວຄວນຫົດນ້ຳໃຫ້ຊຸ່ມພໍສົມຄວນ ຈາກນັ້ນໃຊ້ມີດປາດຢາງຄຽນທີ່ ພັນປາກບາດຮອຍທາມກິ່ງບໍ່ດັ່ງນັ້ນຈະເຮັດໃຫ້ລຳຕົ້ນຈະກິ່ວທີ່ຮອຍທາມ ແລະ ເຮັດໃຫ້ຕົ້ນໄມ້ເຕີບໂຕຊ້າເມື່ອເວລາຕົ້ນໃຫຍ່ຂຶ້ນ ກໍຈະຫັກລົ້ມໄດ້ງ່າຍ.

ການເລືອກຕົ້ນໝາກຂາມຫວານ ທີ່ຈະໃຊ້ປູກນັ້ນສ່ວນຫລາຍນິຍົມເລືອກຕົ້ນທີ່ເຮັດຈາກສ່ວນທີ່ໄວ້ໃຈຫລືສູນສະຖານທີ່ຂອງລັດ ຈຶ່ງນຳມາ ຊຳໄວ້ກ່ອນ ເພື່ອຈະໄດ້ບຳລຸງຮັກສາໃຫ້ລຳຕົ້ນມີຄວາມແຂງແຮງສົມບູນ ແລະ ຕົ້ນມີຂະໜາດໃຫຍ່ຂຶ້ນ. ປົກກະຕິແລ້ວຕົ້ນພັນດີແມ່ນຢູ່ໃນຊ່ວງທ້າຍລະດູຝົນແລ້ວມາຊຳໄວ້ອີກ 4-5 ເດືອນ ແລ້ວນຳໄປປູກຕົ້ນລະດູຝົນ (ພຶດສະພາ) ຊຶ່ງຕົ້ນໝາກຂາມຫວານຈະມີຄວາມສູງປະມານ 80-100 ຊຕມ ຕົ້ນຈະມີຄວາມແຂງແຮງສະໝ່ຳສະເໝີເມື່ອປູກແລ້ວມັກຈະຈະເລີນເຕີບໂຕ ໄວກ່ວາຕົ້ນທີ່ໄດ້ຈາກການທາມໃໝ່ໆ.

<u>ການບົວລະບັດຮັກສາ:</u>

ເພື່ອຢາກໃຫ້ຕົ້ນຫມາກຂາມຈະເລີນເຕີບໂຕໄວ ແລະ ສະຫມ່ຳສະເຫມີຈຳຕ້ອງໄດ້ດູແລຢ່າງເນື່ອງນິດລຽນຕິດ ແລະ ບາງບັນຫາທີ່ຈຳ ຕ້ອງເອົາໃຈໃສ່ດັ່ງນີ້:

- ການຕັດແຕ່ງ: ໄມ້ກິນຫມາກທຸກປະເພດນັ້ນຕ້ອງມີການຕັດແຕ່ງເປັນລັກສະນະປະຈຳຂອງພືດຊະນິດນີ້, ການຕັດແຕ່ງກິ່ງງ່າສຳລັບ ຕົ້ນຫມາກຂາມຫວານ ແມ່ນຈະເລີ່ມແຕ່ປີທີ 3-4 ຫລັງຈາກປູກ ເວລາຕົ້ນໄມ້ເລີ່ມເປັນຫມາກ. ແຕ່ໃນກໍລະນີທີ່ຈະຕັດແຕ່ງໃຫ້ຕົ້ນຫມາກຂາມຫວານ ໃຫ້ມີຊົງພຸ່ມດີ ແລະ ສວຍງາມເປັນລະບຽບແມ່ນເລີ່ມຕັດແຕ່ງແຕ່ພືດມີ ຄວາມສູງ 50 ຊຕມ ເພື່ອໃຫ້ແຕກກິ່ງງ່າສາຂາອອກໄປເປັນພຸ່ມ.

ຫລັງຈາກໄດ້ເກັບກູ້ຫມາກຂາມຫມົດແລ້ວຄວນຕັດແຕ່ງງ່າທີ່ຕາຍງ່າທີ່ມີພະຍາດ ຫລື ແມງໄມ້ທຳລາຍ, ງ່າທີ່ຫັກ, ງ່າທີ່ປົ່ງໄຂ່ວກັນຈົນເກີນ ຫມາ ການຕັດແຕ່ງງ່າໃຫ້ພຸ່ມມີຊ່ອງຫວ່າງເພື່ອຮັບແສງສະຫວ່າງເພາະວ່າ ຈະຊ່ວຍໃຫ້ອອກດອກ ແລະ ຕິດຫມາກໄປທົ່ວທຸກກິ່ງງ່າ, ຊ່ວຍໃຫ້ຝັກມີຄຸນນະພາບດີ ແລະ ຫລຸດຜ່ອນບັນຫາການຫັກຂອງງ່າເມື່ອເວລາຝັກໃຫຍ່ຂຶ້ນ.

ການໃສ່ຝຸ່ນ. ຕົ້ນຫມາກຂາມຫວານທີ່ຍັງບໍ່ທັນເປັນຫມາກ ຫລືຫລັງຈາກປູກໄດ້ 1 ປີ ຄວນໃສ່ຝຸ່ນຄອກ ຫລືຝຸ່ນບົ່ມປະສົມກັບຝຸ່ນເຄມີສູດ 15-15-15 ໃນອັດຕາ 200-300 ກລາມ/ຕົ້ນ ໃນນີ້ໃຫ້ແບ່ງໃສ່ 2-3 ຄັ້ງ ບາງຄັ້ງໃນຊ່ວງສຸດທ້າຍອາດຈະມີການເພີ່ມປຸ໋ຍ ຫລືຝຸ່ນເຄມີທາດ ເຂົ້ານຳເພື່ອຊ່ວຍໃຫ້ຕົ້ນໄມ້ໃຫຍ່ໄວຂຶ້ນ. ອັດຕາຝຸ່ນທີ່ໃສ່ຈະເພີ່ມຂຶ້ນຕາມອາ ຍຸ ແລະ ຂະຫນາດຂອງ ຕົ້ນ, ເມື່ອເວລາຫມາກຂາມເລີ່ມຈະໃຫ້ ຫມາກແລ້ວນັ້ນຕ້ອງປ່ຽນສູດຝຸ່ນເຄມີຕາມຊ່ວງເວລາດັ່ງນີ້.

ໃນຊ່ວງເວລາກ່ອນອອກດອກ. ຄວນໃສ່ຝຸ່ນເຄມີສູດ 8-24- 24 ຫລື 9-24-24 ຫລື 12-24-12 ເພື່ອຊ່ວຍການສ້າງຕາຂອງດອກ.

ໃນຊ່ວງເວລາຫລັງຈາກຕິດຫມາກ 1-2 ເດືອນໃຫ້ໃສ່ຝຸ່ນເຄ ມີ

ສູດ 15-15-15 ເພື່ອບຳລຸງຝັກໃຫ້ສົມບູນ.

ໃນຊ່ວງເວລາຝັກໃຫຍ່ ( ຫລັງຈາກຕິດໝາກ 5 ເດືອນ ) ໃຫ້ໃສ່ຝຸ່ນເຄມີສູດ 13-13-21. ເພື່ອຊ່ວຍໃຫ້ຝັກມີຄຸນນະພາບດີ. ມີຄວາມຫວານສູງ, ສຳລັບອັດຕາທີ່ໃສ່ນັ້ນຄວນ ຄຳນຶງ ຫລືຄິດໄລ່ຕາມຂະ ໜາດຂອງຕົ້ນ ແລະ ສະພາບການຕິດຝັກ. ໂດຍທົ່ວໄປຕົ້ນຂາມມີອາຍຸ 5-6 ປີຈະມີຝຸ່ນສູງ 4-5 ແມັດ. ດັ່ງນັ້ນຄວນໃສ່ຝຸ່ນເຄມີ ຄັ້ງລະ 1-2 ກິ ໂລກຼາມ ສ່ວນຝຸ່ນຄອກ ຫລືຝຸ່ນບົ່ມ ນັ້ນອາດຈະໃສ່ໃນໄລຍະທີ່ຕິດຝັກ ແລ້ວ 1-2 ເດືອນ ໃນອັດຕາ 20-30 ກິໂລກຼາມ ພ້ອມກັບຝຸ່ນເຄມີ ສູດ 15-15-15. ເລີຍກໍໄດ້ ເພາະຈະຊ່ວຍໃຫ້ຕົ້ນມີຄວາມແຂງແຮງສົມບູນ ການຈະເລີນເຕີບໂຕຂອງຝັກຈະດີຂຶ້ນ.

ໝາກຂາມຫວານເປັນພືດທີ່ມີຄວາມຕ້ອງການທາດໂປຕັສຊຽມ ສູງພໍສົມຄວນຊຶ່ງມັກຈະພົບເຫັນໃນສ່ວນທີ່ປູກມາດົນແລ້ວ, ນອກຈາກນີ້ກໍ ແມ່ນຂາດການບຳລຸງຮັກສາໃສ່ຝຸ່ນບໍ່ພຽງພໍ ຈະເປັນເຫດໃຫ້ການປ່ຽນແປງ ລົດຊາດຂອງນວນໝາກຂາມ. ອີກຢ່າງນຶ່ງໃນກໍລະນີໝາກຂາມຫວານ ຊ່ວງທຳອິດມີຄວາມແຊບ, ຫວານດີ ແຕ່ພໍຕໍ່ມາອີກ 5-6 ປີຊ້ຳພັດມີລົດຊາດສົ້ມເກີດຂຶ້ນ ໃນກໍລະນີນີ້ອາດຈະມີສາຍເຫດຕ່າງ ໆດັ່ງນີ້:

<u>ສາຍເຫດທີ 1</u> : ທາດອາຫານທີ່ມີສະສົມຢູ່ໃນດິນຖືກຕົ້ນ ໝາກຂາມດູດເອົາໄປລ້ຽງລຳຕົ້ນຈົນເກືອບໝົດ ບໍລິມາດທີ່ໃສ່ປຸ໋ຍ ຫລື ຝຸ່ນລົງໄປບໍ່ພຽງພໍກັບຄວາມຕ້ອງການຂອງຕົ້ນໝາກຂາມທີ່ຈະດູດເອົາໄປລ້ຽງຝັກໝາກຂາມ ດັ່ງນັ້ນເພື່ອໃຫ້ໝາກຂາມມີຄວາມຫວານເພີ່ມຂຶ້ນຄວນໃສ່ ຝຸ່ນ ຫລື ປຸ໋ຍໃຫ້ພຽງພໍຕາມຄວາມຕ້ອງການຂອງຕົ້ນພືດ ນອກຈາກນີ້ກໍຄວນ ໃສ່ປຸ໋ຍໃຫ້ລຽນຕິດກ່ວາເກົ່າ ແລະ ປຸ໋ຍທີ່ຈະໃຊ້ຄວນເລືອງໃສ່ປະເພດໂປ ຕັດຊຽມ (K).

<u>ສາຍເຫດທີ 2</u> : ນ້ຳກໍແມ່ນປັດໃຈໜຶ່ງທີ່ເຮັດໃຫ້ໝາກຂາມສົ້ມ.

ເພາະວ່ານ້ຳເປັນສິ່ງທີ່ຊ່ວຍລະລາຍຝຸ່ນ ຫລື ປຸ໋ຍໃຫ້ເປັນທາດອາຫານ ສາມາດຫລໍ່ລ້ຽງຕົ້ນພືດໄດ້. ດັ່ງນັ້ນ ບໍ່ຄວນໃຫ້ດິນຂາດນ້ຳ ຫລື ປະໃຫ້ ດິນແຫ້ງແລ້ງເກີນໄປໃນຊ່ວງເວລາເປັນໝາກ.

ກົງກັນຂ້າມ ທີ່ຜ່ານມາ ແມ່ນມັກໄດ້ຍິນຢູ່ເລື້ອຍ ໆວ່າໝາກ ຂາມເປັນພືດທີ່ ທົນທານຕໍ່ຄວາມແຫ້ງແລ້ງໄດ້ນັ້ນແມ່ນຄວາມຈິງສຳລັບໝາກຂາມສົ້ມ ແຕ່ຖ້າຈະປູກໝາກຂາມຫວານແລ້ວຄວນຄຳນຶງເຖິງແຫລ່ງນ້ຳເພື່ອໄວ້ທົດເວລາຝົນບໍ່ຕົກ. ຖ້າບໍ່ດັ່ງນັ້ນຈະບໍ່ປະສົບຄວາມສຳເລັດໃນການ ປູກໝາກຂາມຫວານ.

<u>ການໃຊ້ສານກະຕຸ້ນ (ຮໍໂມນ) ແລະ ປຸ໋ຍໃບ</u> :

ໃນປັດຈຸບັນການປູກໝາກຂາມຫວານນັ້ນ ຊາວສວນຈະມັກໃຊ້ສານກະຕຸ້ນ ຫລື ຮໍໂມນ ແລະ ປຸ໋ຍສີດໃສ່ໃບ ເພື່ອຊ່ວຍເຮັດໃຫ້ຝັກໝາກຂາມມີຄຸນນະພາບດີຢ່າງສະໝ່ຳສະເໝີ ໂດຍສະເພາະແມ່ນສວນໃນເນື້ອ ທີ່ຂາດນ້ຳ ແລະ ການສີດປຸ໋ຍເຂົ້າໃສ່ໃບແມ່ນສາມາດປ່ຽນແທນຈາກການດູດຊຶມທາດອາຫານຈາກຮາກ.

ສານກະຕຸ້ນທີ່ມັກໃຊ້ເປັນສ່ວນຫລາຍແມ່ນຈຳພວກNAA ເຊັ່ນ:ຮັບນີແພນໂນຟິກສ໌, ຟິກສ໌ ເຫລົ່ານີ້ເປັນຕົ້ນ. ການໃຊ້ສານປະເພດນີ້ແມ່ນ ສາມາດຊ່ວຍໃຫ້ຂົ້ວດອກ ຫລືຂົ້ວຂອງຝັກໝາກຂາມແຂງກວ່າເກົ່າ ຕົກຫລົ່ນຍາກ . ອັດຕາສ່ວນທີ່ໃຊ້ຄື: ສານກະຕຸ້ນ (ຮໍໂມນ) 1 ຊີຊີຕໍ່ນ້ຳ 20 ລິດ. ວິ ທີສີດແມ່ນແບ່ງເປັນ 3 ໄລຍະ.

- ໄລຍະທຳອິດແມ່ນສີດເວລາດອກກຳລັງຈູມ.
- ໄລຍະທີ 2 ແມ່ນສີດເວລາຫລັງຈາກດອກບານ.
- ໄລຍະທີ 3 ແມ່ນສີດເວ ລາເປັນຝັກອ່ອນ.

ເຖິງຢ່າງໃດກໍຕາມການໃຊ້ສານກະຕຸ້ນ ຫລື ຮໍໂມນບໍ່ແມ່ນວ່າ ຈະຊ່ວຍໃຫ້ໝາກຈັບໄດ້ດີ ແຕ່ກໍມີບາງປັດໃຈທີ່ຄວນເອົາໃຈໃສ່ຕື່ມຕໍ່ເຊັ່ນ:

1- ຈະຕ້ອງໃຫ້ນ້ຳຢ່າງສະໝ່ຳສະເໝີໃນເວລາພຶດເລີ່ມແຕກໃບອ່ອນ.

2- ຄວນຈະກະຕວງໄລຍະໃຫ້ດອກບານກ່ອນ ຫຼືນຳຫຼັງໃນຊ່ວງເວລາຝົນຕົກໜັກ ແລະ ລຽນຕິດ. (ສ່ວນຫລາຍແມ່ນໃຊ້ຢາກະຕຸ້ນ ໃຫ້ດອກອອກໄວ ຫຼືຊ້າ). ປົກກະຕິດອກໝາກຂາມຈະອອກໃນທ້ອງ ເດືອນເມສາເຖິງເດືອນ ພຶດສະພາ( ເດືອນ 4-5 ສາກົນ ).

3- ການຊ່ວຍໃຫ້ມີການປະສົມເກສອນດີ. ຕາມທຳມະຊາດ ແລ້ວໝາກຂາມຫວານເປັນພຶດທີ່ປະສົມ ແຕ່ເກສອນຜູ້ແລະ ເກສອນແມ່ນັ້ນ ຈະສຸກບໍ່ພ້ອມກັນ ດັ່ງນັ້ນຈຳຕ້ອງໃຊ້ວິທີປູກໝາກຂາມສົ້ມສະລັບກາງແຖວຂອງຕົ້ນໝາກຂາມຫວານເພື່ອ ຊ່ວຍ ການປະສົມພັນໃຫ້ດີຂື້ນ.

<u>ການໃຊ້ປຸ໋ຍໃບ</u> :

ໄລຍະແຕກໃບອ່ອນຄວນໃຊ້ປຸ໋ຍສູດ 10-52-17 ; 15-30-15 ຫຼື 10-45-10.

ໄລຍະທີ່ຕິດຝັກແລ້ວ 1-2 ເດືອນ ຄວນໃຊ້ປຸ໋ຍ 10-20-30.

ໄລຍະທີ່ຝັກມີອາຍຸ 5-6 ເດືອນ ຄວນໃຊ້ປຸ໋ຍ ສູດ 13-00-46. ຫຼື 00-00-50.

ອັດຕາທີ່ໃຊ້ແມ່ນ 40-50 ກຼາມຕໍ່ນ້ຳ 20 ລິດ ສີດທຸກ ໆ 10-15 ວັນຕໍ່ຄັ້ງຕິດຕໍ່ກັນ 2-3 ຄັ້ງ. ( ຖ້າສວນໝາກຂາມຫາກມີລະບົບຊົນລະປະທານທີ່ດີກໍຄວນໃສ່ປຸ໋ຍ ຮາກຈະດີກ່ວາ ).

<u>ວິທີຈຳກັດຫຍ້າ (ວັດຊະພືດ)</u>;

ອາດຈະຕັດ ຫຼືຖາງ ໃນຕົ້ນ ແລະ ທ້າຍລະດູຝົນ (ແຕ່ລະ ວັງຫຍ້າແຫ້ງອາດຈະເກີດໄຟໄໝ້) ທຳຄວາມສະອາດໃຫ້ດີ. ຈາກນັ້ນກໍ ໃຊ້ໄຖ ຫຼືຄາດ ພວນດິນຕາມຫວ່າງຕົ້ນ ແລະ ແຖວ.

<u>ການອອກດອກ</u> : ຕາມທຳມະຊາດແລ້ວ ໝາກຂາມຫວານ ຈະ

ອອກດອກ ຫລັງຈາກເລີ່ມແຕກໃບອ່ອນ ໃນທ້ອງເດືອນພຶດສະພາ ເຖິງເດືອນມິຖຸນາ (ເດືອນ 5-6 ສາກົນ) ຫລັງຈາກຈັບຝັກຈະໃຊ້ເວລາ ປະມານ 8-10 ເດືອນຈຶ່ງຈະແກ່ ຊຶ່ງຈະຢູ່ໃນລະຫວ່າງເດືອນທັນວາ ເຖິງເດືອນກຸມພາ (ເດືອນ 12-2 ສາກົນ).

<u>ສາຍເຫດທີ່ພາໃຫ້ຝັກແຕກ</u> : ສ່ວນຫລາຍໝາກຂາມຫວານ ຈະແຕກໄປຕາມແລວເສັ້ນພູ້ນເນື້ອເຫຍື່ອຊັ້ນໃນຂອງເປືອກໝາກຂາມໃນ ເວລາແກ່ນໝາກຂາມປ່ຽນສີຈາກຂຽວເປັນນ້ຳຕານແກ່ (ໄລຍະເປັນມັນໝູ). ສາຍເຫດດັ່ງກ່າວແມ່ນເກີດມາຈາກສາຍເຫດຕ່າງ ໆດັ່ງນີ້:

1. ເປັນນຳແນວພັນຂອງໝາກຂາມ
2. ມີແມງໄມ້ເຂົ້າທຳລາຍ ເຮັດໃຫ້ເປືອກຂອງໝາກຂາມ ຂະຫຍາຍໂຕບໍ່ສະໝ່ຳສະເໝີ ດັ່ງນັ້ນກໍ່ມີການແຕກແຫງ.
3. ລະບົບການດູດນ້ຳຂອງຮາກບໍ່ດີ, ເນື່ອງຈາກເວລາຕົ່ງກ່າ ຊຶ່ງ ຕົ້ນຕໍ່ຖືກຕັດຮາກສັ້ນເກີນໄປ ຈຶ່ງບໍ່ສາມາດຂະຫຍາຍໂຕຢັ່ງລົງດິນເລິກ, ສະເພາະປູກໃນເຂດແຫ້ງແລ້ງພໍເຖິງລະດູຝົນ ຫລື ຫົດນ້ຳໃນເວລາບໍ່ສົມຄວນ ເກີດມີການໂພດນ້ຳຈຶ່ງພາໃຫ້ການຂະຫຍາຍຕົວຂອງຝັກບໍ່ສາມາດປັບຕົວໃຫ້ທັນສະພາບຈຶ່ງເກີດມີການຫັກ ຫລືແຕກ.

<u>ວິທີແກ້ໄຂ</u> : ຈຳຕ້ອງຄັດເລືອກແນວພັນທີ່ດີບໍ່ແຕກ, ຫົດນ້ຳ ສະໝ່ຳສະເໝີ ປ້ອງກັນບໍ່ໃຫ້ແມງໄມ້ເຂົ້າທຳລາຍ (ເຈາະຝັກ), ສຳ ລັບຕົ້ນທີ່ມີລະບົບຮາກບໍ່ສົມບູນຄວນມີການເສີມຮາກຊ່ວຍ, ລະບົບການພວນດິນໃຫ້ເຮັດປົກກະຕິ ເພື່ອຫລຸດຜ່ອນການລະເຫີຍຂອງນ້ຳຈາກໄຕ້ດິນ.

<u>ສາເຫດທີ່ພາໃຫ້ຝັກແຫ້ງ</u> :

1. ພະຍາດແມງໄມ້ ເຈາະງ່າ ຫລືທຳລາຍ ເຊັ່ນບົ້ງເຫລືອງກັດກິນໃບ ຫລືຝັກອ່ອນ ຖ້າວ່າໃບຖືກທຳລາຍຫລາຍ ງ່າກໍ່ຈະແຫ້ງການ ສັງເຄາະທາດອາຫານຈາກໃບບໍ່ມີພຽງພໍ, ເຮັດໃຫ້ຂົ້ວຂອງຝັກແຫ້ງ ແລະ

ຫລົ່ນງ່າຍ.

2. ງ່າຫັກ ຫລືບິດ ເຮັດໃຫ້ທາດອາຫານໄປລ້ຽງຝັກໄດ້ໜ້ອຍຝັກຈຶ່ງບໍ່ເຕັມ ແລະ ແຫ້ງ.

<u>ການປ້ອງກັນ ແລະ ຈຳກັດພະຍາດ ແລະ ແມງໄມ້</u> :

- ພະຍາດ : ຕາມທຳມະດາແລ້ວໝາກຂາມຫວານຈະມີ ພະຍາດລົບກວນໜ້ອຍ, ທີ່ຜ່ານມາເຄີຍພົບເຫັນສ່ວນຫລາຍແມ່ນເຊື້ອລາແປ້ງຊຶ່ງເກີດກັບໃບໝາກຂາມ ແລະ ເຊື້ອລາດຳ ມັກເກີດຕາມຝັກໝາກຂາມແກ່ ຫລືຫລັງຈາກຝັກຖືກເກັບກ່ຽວ. ການປ້ອງກັນແມ່ນໃຊ້ຢາປະເພດ ຄາເບັນດາຊິມ ຫລືແມ່ນໂຄເຊບ ສີດກ່ອນເກັບກ່ຽວ 1-2 ເດືອນ.

- ແມງໄມ້ : ແມງໄມ້ກັດກິນໃບ ຈຳພວກດ້ວງປີກແຂງ (ແມງກະນູນ). ບົ້ງເຈາະລຳຕົ້ນ, ບົ້ງຮໍາໃບ, ບົ້ງຫອຍ, ແມງວງວງຊ້າງນ້ອຍເຈາະຝັກ, ມອດເຈາະຝັກ ແລະ ອື່ນ ໆ.

<u>ການປ້ອງກັນ</u> :

ສຳລັບດ້ວງປະເພດຕ່າງ ໆແມ່ນໃຊ້ຢາປະເພດໂມໂນໂຄຣໂຕຟອສ ຄາບາຣິນ (ເຊວິນ), ມາລາໄທອອນ, ເມທາມິໂດຟອສ ເຫລົ່ານີ້ ສີດເວລາເລີ່ມມີການລະບາດ. ຫລືໃນກໍລະນີໃຊ້ໄຟໄຕ້ກາງຄືນແລ້ວຈັບ ເອົາແມ້ດ້ວງຍິ່ງເປັນການດີ.

ສຳລັບດ້ວງເຈາະຝັກ. ສ່ວນຫລາຍນິຍົມກັນປາບແບບໃຊ້ວິທີ ອົບອາຍນ້ຳຮ້ອນ ຫລືອົບແຫ້ງກໍໄດ້ຈະຊ່ວຍປາບໄດ້ດີ.

<u>ການເກັບຝັກ</u> :

ເວລາໝາກຂາມສຸກແກ່ດີແລ້ວ (ນອນຈະມີສີນ້ຳຕານ ແລະ ແຍກຕົວອອກຈາກເປືອກ ເວລາປອກຈະງ່າຍ ຫລືສັງເກດເຫັນເປືອກເປັນ ນ້ຳຕານແກມໂມກ ແລະ ແຫ້ງ). ວິທີເກັບຄວນໃຊ້ຄົນໃດຂຶ້ນໄປເກັບ ແລະໃຊ້ມີດຕັດ ຕັດຂົ້ວຂອງຝັກໝາກຂາມສະເພາະ ເວລາເກັບແມ່ນໃຊ້ ເວ

ລາຫ່າງກັນປະມານ 4–5 ວັນ/ຄັ້ງ ແລະ ປະມານ 4–5 ຄັ້ງຈຶ່ງ ຈະເກັບໄດ້ຫມົດຕົ້ນ. ສະມັດຕະພາບ. ເມື່ອຕົ້ນຫມາກຂາມມີອາຍຸເຖິງ 10–15 ປີ ສາມາດໄດ້ຜົນຜະລິດເຖິງ 50 ກິໂລກຼາມ/ຕົ້ນ/ປີ.

<u>ວິທີເກັບຮັກສາ</u> : ການເກັບຝັກຫມາກຂາມຫວານໄວ້ດົນອາດຈະມີບັນຫາດ້ານເຊື້ອລາທຳລາຍ ຫລືບາງເທື່ອກໍ່ອາດຈະມີມອດເຈາະຝັກ ເມື່ອເປັນເຊັ່ນນີ້ຄວນມີວິທີການປ້ອງກັນເຊັ່ນ:

1. ກ່ອນເກັບຮັກສາຄວນອົບອາຍນ້ຳ ຫລືຫນຶ້ງເສັຍກ່ອນ. ປະມານ 5 ນາທີແລ້ວມາ ເບີຍໃສ່ແດດ ຫລືໃຊ້ພັດລົມ. ຈາກນັ້ນຈຶ່ງນຳບັນຈຸເຂົ້າຖົງຢາງ.

2. ການອົບແຫ້ງແມ່ນໃຊ້ລະບົບແບບອົບໃບຢາສູບ. ໃຊ້ອຸ່ນຫະພູມຮ້ອນປະມານ 80 ອົງສາເຊ. ນານປະມານ 2 ຊົ່ວໂມງ. (ວິທີນີ້ ຍົມໃຊ້ກັນໂດຍເກັບຮັກສາໄວ້ດົນປະມານ 2–3 ເດືອນ).

# ວິທີປູກໝາກມ່ວງ

<u>ປະຫວັດຄວາມເປັນມາ ແລະ ຄຸນປະໂຫຍດ</u> :

- ໝາກມ່ວງມີຕົ້ນກຳເນີດຢູ່ໃນເຂດອາຊີຕາເວັນອອກສ່ຽງໃຕ້ ໃນລະຫວ່າງອິນເດຍ ແລະ ຟີລິບປິນ, ກ່ອນນີ້ 400 ປີກໍແມ່ນເຄີຍປູກ ແລ້ວການແຜ່ຂະຫຍາຍໝາກມ່ວງຈາກອິນເດຍໄປຮອດອາຟຣິກາ, ເອີລົບຕອນໃຕ້ ແລະ ອາເມລິກາລາຕິນ. ໝາກມ່ວງສຸກ ມີສານ ແລະ ທາດອາຫານປະກອບດ້ວຍເປັນຕົ້ນຕໍ່ເຊັ່ນ: ນ້ຳ 76-80%, ນ້ຳຕານ 13-20% ທາດຊີ້ນ 0,5-0,8%, ທາດສົ້ມ 0,2-0,54% ແລະ ບາງວິຕາມິນ ເຊັ່ນ ວິຕາມິນເອ ແລະ ວິຕາມິນເຊ. ນອກຈາກນີ້ ຍັງສາມາດນຳໃຊ້ເປືອກຂອງຕົ້ນໝາກມ່ວງໄປປຸງແຕ່ງຢາປ້ອງກັນພະຍາດໄດ້ຫລາຍຊະນິດ.

<u>ລັກສະນະທາງພຶກສາດ</u> : ໝາກມ່ວງຈັດເຂົ້າໃນຕະກູນ Anacardiaceae ແລະ ຊື່ວິທະຍາສາດ *Mangifera indica* ເປັນພືດທີ່ມີອາຍຸຍາວ ຂຽວຕະຫລອດປີ.

- ລະບົບຮາກ : ມີຮາກແກ້ວ ແລະ ຮາກຝອຍ, ຮາກແກ້ວ ສາມາດຢັ່ງເລິກໄດ້ເຖິງ 3-4 ແມັດ.

- ລຳຕົ້ນ : ສູງເຖິງ 4,5-21 ແມັດ ໂດຍທົ່ວໄປແລ້ວຕົ້ນທີ່ສູງນັ້ນ ສ່ວນຫລາຍແມ່ນປູກດ້ວຍແກ່ນ.

- ໃບ : ມີຂະໜາດແຕກຕ່າງກັນ ເຊັ່ນ ຄວາມຍາວປະມານ15 ຫາ 30 ຊັງຕີແມັດ ແລະ ກວ້າງປະມານ 3-9 ຊັງຕີແມັດ. ຂຶ້ນກັບແນວພັນ ແລະ ຄວາມອຸດົມສົມບູນຂອງດິນ.

- ດອກ : ມີຢູ່ 2 ຊະນິດ ເຊັ່ນ ດອກພູ້ ແລະ ດອກແມ່ ແລະ ດອກສົມບູນເພດ ( ມີທັງພູ້ ແລະ ແມ່ຢູ່ດອກດຽວກັນ ). ສີຂອງດອກຈະເປັນສີເຫລືອງ, ສີກຸຫລາບຈາງ ໆ, ສີນ້ຳໝາກກຽງ ເຫລົ່ານີ້ເປັນຕົ້ນ.

<u>ແນວພັນໝາກມ່ວງ</u> : ປັດຈຸບັນຢູ່ປະເທດເຮົາມີຫລາຍຊະນິດເຊັ່ນ ໝາກມ່ວງປ່າ ແລະ ໝາກມ່ວງທີ່ນິຍົມຂອງມວນຊົນ (ພັນປັບປຸງ ແລະ ພັນພື້ນເມືອງ) .

- ສຳລັບແນວພັນປັບປຸງທີ່ນິຍົມກັນປັດຈຸບັນແມ່ນ: ໝາກມ່ວງ ນ້ຳດອກໄມ້ (ໃຊ້ກິນສຸກ) ແລະ ກິນດິບແມ່ນພັນຂຽວສະເຫວີຍ, ຟ້າລັ່ນ ເຫລົ່ານີ້ເປັນຕົ້ນ.

- ສຳລັບພັນພື້ນເມືອງ ແມ່ນມີ ໝາກມ່ວງທັງ, ມ່ວງກະເສັນ, ມ່ວງແກວ, ມ່ວງກະສີ, ມ່ວງໄຂ່, ມ່ວງຂີ້ຊີ, ມ່ວງງາຊ້າງ, ມ່ວງ ກະສອຍ ເຫລົ່ານີ້ເປັນຕົ້ນ.

<u>ສະພາບດິນຟ້າອາກາດທີ່ເໝາະສົມ</u> : ໝາກມ່ວງສາມາດປູກໄດ້ດີໃນເຂດຮ້ອນ ແລະ ດິນຊຸ່ມຊື່ນມີອຸນຫະພູມອາກາດປານກາງ ລະຫວ່າງ 20-30 ອົງສາ ລະດັບນ້ຳທະເລປະມານ 100-800 ແມັດ, ປະລິມານນ້ຳຝົນປະມານ 1.200-2.500 ມມ/ປີ. ສຳລັບດິນແມ່ນສາມາດປູກໄດ້ໃນດິນເກືອບທຸກຊະນິດ, ແຕ່ດິນທີ່ເໝາະສົມທີ່ສຸດແມ່ນດິນປົນຊາຍ, ສາມາດລະບາຍນ້ຳໄດ້ດີ, ຄວາມເປັນກົດເປັນດ່າງຂອງດິນແມ່ນຢູ່ໃນ ລະຫວ່າງ PH 5-7.

<u>ການຂະຫຍາຍພັນ</u> : ມີ 2 ວິທີດ້ວຍກັນເຊັ່ນ :

1- ຂະຫຍາຍພັນແບບມີເພດສົມບູນ (ໃຊ້ແກ່ນປູກ)

2- ຂະຫຍາຍພັນແບບບໍ່ມີເພດ (ໃຊ້ສ່ວນຕ່າງໆຂອງລຳຕົ້ນ)

- <u>ການຂະຫຍາຍພັນແບບມີເພດສົມບູນ</u> : ວິທີນີ້ເຫັນວ່າມີຂໍ້ດີ ຢູ່ບ່ອນວ່າ ລຳຕົ້ນບໍ່ຫັກ ຫລື ລົ້ມງ່າຍ ແຕ່ຂໍ້ເສຍຫາຍມີຫລາຍກວ່າເຊັ່ນ ວ່າ ບໍ່ສາມາດຮັກສາພັນເດີມໄດ້, ມີອາຍຸຍາວ (ດົນຈຶ່ງໃຫ້ໝາກ), ໃຫ້ໝາກໜ້ອຍ, ບໍ່ມີລົດແຊບເໝືອນດັ່ງທີ່ຕ້ອງການ. ໃນປັດຈຸບັນນີ້ ແມ່ນນິຍົມການໃຊ້ແກ່ນກ້າໄວ້ເພື່ອເຮັດຕົ້ນຕໍສຳລັບຂະຫຍາຍພັນແບບບໍ່ມີເພດ.

- <u>ການຂະຫຍາຍພັນແບບບໍ່ມີເພດ</u> : ແມ່ນການຂະຫຍາຍພັນແບບໃຊ້ພາກສ່ວນຕ່າງໆຂອງລຳຕົ້ນເຊັ່ນ ກ້ານ, ງ່າ, ຍອດ, ຕາ ໂດຍໃຊ້ວິທີທາບກິ່ງ, ສຽບຂ້າງ, ສຽບຍອດ, ຕິດຕາ. ເຫລົ່ານີ້ເປັນຕົ້ນ ໃນປັດຈຸບັນແມ່ນນິຍົມໃຊ້ວິທີ ທາບກິ່ງເປັນສ່ວນຫລາຍ ເພາະວິທີນີ້ເຮັດງ່າຍໄດ້ຮັບຜົນສູງ ແລະ ທັນການກວ່າ.

<u>ວິທີຂະຫຍາຍພັນ</u> : ແມ່ນມີຫລາຍຂັ້ນຕອນເຊັ່ນວ່າ :

+ <u>ການກຽມຕົ້ນຕໍ</u> : ກໍແມ່ນເພາະໝາກມ່ວງໃສ່ໝ້ານ ຫລື ຖົງຢາງ ຈົນມີອາຍຸ 4-5 ເດືອນຈຶ່ງໃຫ້ມີຂະໜາດຂອງລຳຕົ້ນໃຫຍ່ປະມານກ້ານ ສໍດຳ, ກະກຽມກາບໝາກພ້າວຫຸ້ມ ແລະ ພັກທີ່ແຊ່ໄວ້ປະມານ 3-5ເດືອນ ບົ່ມໃສ່ຖົງຢາງ ແລ້ວນຳຕົ້ນທີ່ກຽມໄວ້ນັ້ນມາໃສ່ ຈຶ່ງສົມ (ລຳຕົ້ນ) ຈາກປາກຖົງຢາງຍາວປະມານ 8-10 ຊັງຕີແມັດ. ການບົ່ມຈຸກາບໝາກພ້າວໃສ່ຖົງຄວນຍັດໃຫ້ແໜ້ນ ແລ້ວມັດປາກຖົງໃຫ້ແໜ້ນເຂົ້າກັນ. ຈາກນັ້ນ ກໍນຳໄປທາບໃສ່ກິ່ງງ່າພັນດີ. ສຳລັບກິ່ງງ່າພັນດີກໍຄວນເລືອກເອົາງ່າທີ່ມີອາຍຸປະມານ 1 ປີ. ຈາກຕົ້ນທີ່ຕ້ອງການຊຶ່ງເຫັນວ່າເປັນພັນດີ.

<u>ຂັ້ນຕອນຕ່າງໆຂອງວິທີປະຕິບັດການທາບກິ່ງ</u> :

1. ກຽມຕົ້ນຕໍໃຫ້ຮຽບຮ້ອຍ
2. ເລືອກກິ່ງງ່າຂອງພັນດີທີ່ຕ້ອງການ
3. ປາດສະຫລຽງຕົ້ນ ແລະ ງ່າທີ່ຈະທາບໃຫ້ເທົ່າໆກັນ

4. ຄ້ອນດ້ວຍຢ່າງແຕ່ລຸ່ມຂຶ້ນເທິງໃຫ້ແໜ້ນຕິດຈອດກັນດີ

5. ເວລາທາບສຳເລັດແລ້ວຄວນໃຊ້ເຊືອກມັດຖົງຢາງຂອງຕົ້ນຕໍ່ໄວ້ຕິດກັບງ່າເພື່ອບໍ່ໃຫ້ມີການເໜັງຕີງແຮງເກີນໄປ.

6. ຫລັງຈາກທາບໄດ້ 45 ວັນ ກໍ່ສາມາດຕັດກິ່ງງ່າທີ່ທາບໄປຊຳໄດ້.

<u>ວິທີປູກ</u> : ຫລັງຈາກຂຸດຂຸມຂະໜາດ 1 ມ³ (1×1×1) ມ³ ແລ້ວ ແມ່ນເອົາຝຸ່ນຄອກປົນກັບດິນໜ້າທີ່ຂຸດອອກຈາກຂຸມນັ້ນລົງໃສ່ພົ້ນ ຂຸມ ແລະ ເອົາດິນພົ້ນຂຸມທີ່ຂຸດນັ້ນຖົມໃສ່ທາງເທິງໃຫ້ເຕັມຂຸມ. ຈາກນັ້ນ ກໍ່ເອົາຕົ້ນທີ່ທາບຈາກການຊຳໄວ້ນັ້ນປູກໃສ່ເຄິ່ງກາງຂອງຂຸມ (ຂະນະວາງຄວນໃຊ້ໄມ້ປັກໃສ່ໃກ້ກັບລຳຕົ້ນເພື່ອມັດຕົ້ນມ່ວງໃສ່ ເພາະເປັນວິທີປ້ອງ ກັນການຫັກ ຫລື ລົ້ມ). ຈາກນັ້ນກໍ່ໃຊ້ເຟືອງ ຫລື ເສດຫຍ້າປົກປາກຂຸມເພື່ອຮັກສາຄວາມຊຸ່ມຊື່ນຂອງນ້ຳ (ຖ້າຂຸມນັ້ນເຫັນວ່າມີຄວາມແຫ້ງກໍ່ຄວນ ຫົດນ້ຳ).

<u>ໄລຍະປູກ</u> : ສ່ວນຫລາຍມັກປູກໃນໄລຍະ 8×8 ມ ຫລື 7×7 ມ ຫລັງຈາກປູກໄດ້ 3 ປີອາດຈະໄດ້ເກັບໝາກ ຖ້າຫາກມີການບົວລະບັດຮັກສາດີ.

<u>ການບົວລະບັດຮັກສາ</u> :

- ການໃສ່ຝຸ່ນ : ໃນຊ່ວງການຈະເລີນເຕີບໂຕ, ຕົ້ນໝາກມ່ວງຕ້ອງການຝຸ່ນອາຊົດ (N). ໃນລະຍະເລີ່ມ ຈະເປັນໝາກແມ່ນ ຕ້ອງການທາດຟົສຟໍ (P) ແລະ ໂປຕາສ (K) ເປັນສ່ວນຫລາຍ. ດັ່ງນັ້ນ ເຮົາຄວນເອົາໃຈໃສ່ແຕ່ລະຂັ້ນຕອນ. ອັດຕາຝຸ່ນທີ່ຕ້ອງໃຊ້ແມ່ນ 200 - 300 ກລາມຕໍ່ຕົ້ນ ໃສ່ອ້ອມວົງລັດສະໝີຂອງພຸ່ມປຸ່ຍເຄມີທີ່ໃຊ້ສ່ວນ ຫລາຍມັກໃຊ້ 15-15-15 ຫລື 13-13-13.
- ການໃຫ້ນ້ຳ : ເວລາຕົ້ນມ່ວງຍັງນ້ອຍ ແລະ ໃນທ້ອງລະ ດູ

ແລ້ງຄວນຫົດນ້ຳ ອາທິດລະເທື່ອ. ຖ້າຫາກຕົ້ນໃຫຍ່ແລ້ວແມ່ນຫົດເວລາ ຫຼັງຈາກໃສ່ຝຸ່ນ ແລະ ເກັບກ່ຽວ.

- ການເສຍຫຍ້າ ແລະ ພວນດິນ : ຖ້າເຮົາປູກໃນເນື້ອທີ່ ນ້ອຍສາມາດໃຊ້ແຮງງານຄົນຖາງເອົາ ແຕ່ຖ້າເປັນເນື້ອທີ່ກວ້າງ ແລະ ເປັນການປະຢັດເສດຖະກິດແມ່ນຄວນໃຊ້ລົດຕັດຫຍ້າ ຫຼື ໃຊ້ຢາຂ້າຫຍ້າ ຈາກນັ້ນກໍໄຖ ຫຼື ຄາດຕໍ່ຫຍ້າທັງນັ້ນກໍເພື່ອບົ່ມຝຸ່ນໄປໃນຕົວ ແລະ ຮັກສາ ການລະເຫີຍຂອງນ້ຳໃຕ້ດິນໄດ້ເປັນສ່ວນຫຼາຍ.

+ <u>ການຕັດແຕ່ງ</u> : ຈຸດປະສົງຕົ້ນຕໍແມ່ນເຮັດໃຫ້ຕົ້ນໄມ້ຕ່ຳມີ ແສງສະຫວ່າງສ່ອງເຂົ້າໄປທົ່ວພຸ່ມ ທັງນັ້ນກໍເພື່ອສະດວກໃນການເກັບກ່ຽວ ແລະ ຊ່ວຍໃຫ້ຕົ້ນມ່ວງມີໂອກາດໄດ້ສັງເຄາະແສງຫຼາຍເທົ່າທີ່ຄວນ, ເປັນການປ້ອງກັນພະຍາດແມງໄມ້ໄດ້ສ່ວນໃດສ່ວນໜຶ່ງ.

ຂັ້ນຕອນໃນການຕັດແຕ່ງແມ່ນໃນຊ່ວງ 3 ປີທຳອິດ ແມ່ນເລີ່ມ ຕັດແຕ່ງ ຈາກນັ້ນກໍແມ່ນຕັດແຕ່ງເວລາເກັບກ່ຽວ. ການຕັດແຕ່ງແມ່ນຕັດ ງ່າແກ່, ງ່າເປັນພະຍາດ ຫຼື ແມງໄມ້ທຳລາຍ, ງ່າທີ່ຢູ່ທາງໃນຂອງພຸ່ມ.

<u>ພະຍາດ ແລະ ແມງໄມ້</u> :

- <u>ພະຍາດ</u> : ສ່ວນຫຼາຍມັກຈະພົບແອນແທກໂນສ ແລະ ເຊື້ອລາມັກຈະພົບລາແປ້ງ. ສຳລັບພະຍາດແອນແທກໂນສ ມັກລະບາດຢູ່ໃບ , ດອກ ແລະ ໝາກ ແລະ ເຊື້ອລາແປ້ງມັກຈະລະບາດຢູ່ບໍລິເວນດຽວກັນ.

ອາການທີ່ພົບສະທ້ອນແມ່ນ: ສຳລັບໃບຈະເປັນຈຸດສີນ້ຳຕານ ຫຼື ສີດຳ ເປັນຮູບວົງມົນ ແລະ ຂະຫຍາຍຕົວໄປສູ່ເນື້ອເຍື່ອຂອງໃບເຮັດໃຫ້ໃບແຫ້ງ ແລະ ເປັນຮູ. ສຳລັບດອກແມ່ນຈະເຮັດໃຫ້ດອກຫຼົ່ນ. ສຳລັບໝາກຈະເຫັນໄດ້ເປັນຈຸດສີນ້ຳຕານ.

<u>ວິທີປ້ອງກັນ</u> : ໃຊ້ຢາປະເພດ ກູປຣາວິດ, ບີໂນມີນຈຳນວນ 2-3 ບ່ວງຕໍ່ນ້ຳ 20 ລິດ ສີດໃຫ້ທົ່ວບໍລິເວນລຳຕົ້ນ.

ແມງໄມ້ : ສ່ວນຫລາຍແມ່ນເພັ້ຍຈັກຈັ່ນ, ແມງວັນທອງ, ບົ້ງເຈາະລຳຕົ້ນ. ວິທີປ້ອງກັນແມ່ນໃຊ້ຢາສີດປະເພດເຊວິນ 85% ( ຄາບາຣິນ) ໃນອັດຕາ 2-3 ບ່ວງແກງຕໍ່ນ້ຳ 20 ລິດສີດໃສ່ທົ່ວບໍລິເວນລຳຕົ້ນ.

ການເກັບກ່ຽວ : ຫລັງຈາກຕົ້ນມ່ວງບານດອກ ຫາ ໝາກແກ່ຈະໃຊ້ເວລາ 3-4 ເດືອນຂຶ້ນກັບຊະນິດແນວພັນ. ການເກັບກ່ຽວຄວນລະມັດລະວັງບໍ່ໃຫ້ແຕກ ຄວນໃຊ້ກະຕ່ອງ ຫລື ກະຕ່າ ປົດເອົາຈາກບົນກົກ ຄວນເອົາໜ່ວຍຊຸ້ມໄວ້ບໍ່ໃຫ້ຢາງມ່ວງຖືກໜ່ວຍຖ້າບໍ່ດັ່ງນັ້ນຈະບໍ່ງາມ, ລຳບາກຕໍ່ການບົ່ມ ແລະ ໝາກຈະບໍ່ສວຍງາມ.

# ວິທີ ປູກໝາກຂຽບ

<u>ປະຫວັດຄວາມເປັນມາ ແລະຄຸນຄ່າທາງດ້ານອາຫານ</u> :

ໝາກຂຽບເປັນຕົ້ນໄມ້ທີ່ມີຖິ່ນກຳເນີດຢູ່ເຂດຮ້ອນ ແລະ ເຂດແຫ້ງແລ້ງຂອງອາເມລິກາກາງ ແຕ່ກໍ່ມີການຂະຫຍາຍນຳມາປູກຢູ່ບ້ານເຮົາ ມາແຕ່ດົນນານແລ້ວ.

ປັດຈຸບັນໝາກຂຽບຖືວ່າເປັນພືດສິນຄ້າປະເພດນຶ່ງຂອງບ້ານ ເຮົາ ຊຶ່ງມີພາຍໃນທ້ອງຕະຫລາດຕາມລະດູການ, ຄົນນັກນິຍົມກິນຊຶ່ງມີລົດ ຊາດ ຫອມຫວານທັງເປັນຕົ້ນໄມ້ທີ່ປູກງ່າຍ ສາມາດເກີດໄດ້ໃນດິນທຸກປະ ເພດ ແລະ ເກືອບທຸກສະພາບແວດລ້ອມ. ທົນທານຕໍ່ພະຍາດບົ້ງແມງຕ່າງ ໆທົນທານຕໍ່ຄວາມແຫ້ງແລ້ງ.

ກ່ຽວກັບທາດອາຫານບັນຈຸໃນໝາກຂຽບແມ່ນ ທາດຊີ້ນປະ ມານ 1,8% ໄຂມັນ 0,14%, ນ້ຳຕານ 18,4%.

<u>ລັກສະນະທາງພືກສາດ</u> : ໝາກຂຽບແມ່ນຈັດເຂົ້າໃນຕະກູນ ຊຶ່ງມີຊື່ວິທະຍາສາດວ່າ *Tamarindus indica L* ລັກສະນະຂອງ ລຳຕົ້ນແມ່ນເປັນພືດ ເຄິ່ງພຸ່ມເຄິ່ງສູງ ຊຶ່ງມີຄວາມສູງປະມານ 2-7 ແມັດ.

<u>ສະພາບດິນຟ້າອາກາດທີ່ເໝາະສົມ</u> :

ຕົ້ນໝາກຂຽບເປັນພືດເຂດຮ້ອນທົນທານຕໍ່ຄວາມແຫ້ງແລ້ງດັ່ງ ນັ້ນ

ຄວາມຊຸ່ມຊື່ນຂອງອາກາດ ປານກາງ, ສາມາດຈະເລີນເຕີບໂຕໄດ້ ໃນເຂດຮ້ອນ ແລະ ເຄິ່ງແຫ້ງແລ້ງ. ເພື່ອໃຫ້ໝາກຂຽບໜ່ວຍໃຫຍ່ ແລະ ຄຸນນະພາບດີຄວນປູກໃນລະດູການທີ່ເໝາະສົມເຊັ່ນ ປູກຕົ້ນລະດູຝົນ . ໝາກຂຽບສາມາດປູກໄດ້ໃນດິນທຸກຊະນິດ ແຕ່ເໝາະສົມທີ່ສຸດແມ່ນ ດິນຊາຍແກມຕົມ.

<u>ແນວພັນ</u> :

ປັດຈຸບັນຢູ່ບ້ານເຮົາມີແນວພັນພຽງ 2 ຊະນິດເຊັ່ນພັນໝາກ ຂຽບຝ້າຍ ແລະ ພັນໝາກຂຽບໜັງ.

ໝາກຂຽບຝ້າຍ ມີລົດຊາດຫອມ ແລະ ຫວານກ່ວາໝາກ ຂຽບໜັງ, ນວນຕິດກັບເປືອກ, ເວລາສຸກຈະບໍ່ສາມາດຮັກສາໄວ້ດົນໄດ້ເພາະວ່າມັນເປື່ອຍ ແລະ ນວນໄວກ່ວາ.

ໝາກຂຽບໜັງ ມີລົດຊາດອ້ອນຊ້າງສົ້ມເລັກນ້ອຍ, ບໍ່ຫອມ ແລະ ບໍ່ຫວານເທົ່າໝາກຂຽບຝ້າຍ ແຕ່ສາມາດເກັບຮັກສາໄວ້ນານກ່ວາບໍ່ເປື່ອຍຫລືນວນງ່າຍ. ເປືອກຂອງໝາກຂຽບໜັງສາມາດປອກໄດ້ສະດວກ ບໍ່ຕິດກັບນວນຂອງແກ່ນ.

<u>ການຂະຫຍາຍພັນ</u> : ຕາມທຳມະດາໝາກຂຽບມັກນິຍົມກັນ ໂດຍທົ່ວໄປແມ່ນໃຊ້ວິທີກ້າແກ່ນ. ແຕ່ວິທີການອື່ນ ໆເຊັ່ນຕິດຕາ, ທາບງ່າ ຫລືຕໍ່ງ່າກໍສາມາດເຮັດໄດ້ ແຕ່ມັນສິ້ນເປືອງ ແລະ ເສັຍເວລາກ່ວາການ ກ້າແກ່ນ.

ການຂະຫຍາຍພັນດ້ວຍວິທີກ້າແກ່ນ: ເລືອກເອົາຈາກຕົ້ນທີ່ອຸດົມສົມບູນ, ມີຄຸນນະພາບດີ, ໜ່ວຍງາມ ແລະ ໃຫຍ່, ປະສະຈາກພະຍາດເຊື້ອລາ ແລະ ແມງໄມ້ລົບກວນ. ແກ່ນໝາກຂຽບທີ່ນຳໄປເຮັດແນວ ບໍ່ຄວນຕາກແດດ ແຕ່ຄວນເພີຍລົມໄວ້ໃຫ້ແຫ້ງໃນຮົ່ມ. ໄລຍະພັກຕົວຂອງແກ່ນໝາກຂຽບເກືອບບໍ່ມີເລີຍ ແລະ ສາມາດເກັບຮັກສາໄວ້ໄດ້ນານເຖິງ3-4

ປີໃນສະພາບອາກາດບ້ານເຮົາ.

<u>ການກ້າເບັ້ຍໝາກຂຽບ</u> : ກ່ອນຈະນຳແກ່ນໄປກ້າຄວນເອົາໄປແຊ່ນ້ຳອຸ່ນ (ອຸ່ນທະພູມ 54- 57 ອົງສາເຊ) ປະມານ 2-3 ຊົ່ວໂມງເພື່ອເຮັດໃຫ້ແກ່ນຊຶມນ້ຳ ແລະ ງອກດີ ນອກຈາກນີ້ກໍຍັງເປັນວິທີປ້ອງກັນ ເຊື້ອລາໄດ້ວິທີກ້າ ແມ່ນອາດຈະກ້າໃສ່ຖົງຢາງ ຫລື ເຮັດເປັນໜານກໍໄດ້ .

- <u>ການກ້າໃສ່ຖົງຢາງ</u> :ກ່ອນອື່ນຄວນກຽມດິນເພື່ອຈະເອົາ ເຂົ້າຖົງຢາງສ່ວນປະກອບຂອງດິນມີ ຊາຍ 2 ສ່ວນ, ຝຸ່ນຄອກ 1 ສ່ວນ ແລະດິນ 3 ສ່ວນ ຂະໜາດຂອງຖົງຢາງແມ່ນປະມານ 8×6 ຊຕມ ໃຊ້ 2 ແກ່ນ ຕໍ່ຖົງຫລັງຈາກກ້າໄດ້ 15 ວັນແລ້ວ ແກ່ນຈະງອກແລ້ວເລືອກເອົາຕົ້ນບໍ່ແຂງແຮງອອກປະໄວ້ແຕ່ລະຖົງພຽງ 1 ຕົ້ນ.

- <u>ການກ້າໃສ່ໜານກ້າ</u> : ຄວນຢອດເມັດໃຫ້ຫ່າງກັນປະມານ7-8 ຊຕມ ເພື່ອບໍ່ໃຫ້ມີການແອອັດ ແລະ ກະທົບຕໍ່ຮາກເວລາຍ້າຍໄປປູກ . ເມື່ອຕົ້ນ (ເບັ້ຍ) ໝາກຂຽບຫາກສູງປະມານ 10-15 ຊຕມ ຫລື ມີ 3-4 ໃບຄວນຍ້າຍໃສ່ຖົງຢາງຂະໜາດ 6×8 ແລະ ນຳໄປຮັກສາ ໄວ້ບ່ອນກ້າ ຫລືຫ້ຶມປະມານ 6-8 ເດືອນຈຶ່ງນຳໄປປູກ.

<u>ການປູກ</u> : ສ່ວນຫລາຍນິຍົມກັນປູກ 2 ວິທີ ເຊັ່ນ:

1. ການນຳເອົາແກ່ນປູກລົງດິນເລີຍ
2. ການນຳເອົາເບັ້ຍໄປປູກ

ແຕ່ປັດຈຸບັນມັກປູກແບບໃຊ້ເບັ້ຍໃນໄລຍະ 4×4 ແມັດ ຫລືປະມານ 630 ຕົ້ນ/ເຮັກຕາ ຂະໜາດຂຸມປູກປະມານ 20×20×20 ຊຕມ ໂດຍໃຊ້ຝຸ່ນຄອກປະມານ 2-3 ກິໂລກຼາມ ປະສົມກັບດິນລົງຂຸມ ຫລັງຈາກ ປູກແລ້ວຄວນຫົດນ້ຳໃຫ້ຊຸ່ມດີ. ຖ້າສາມາດເຮັດໄດ້ກໍແມ່ນຄວນເຮັດຮົ່ມກຳ ບັງແຕ່ລະຕົ້ນໃນເວລາປູກໃໝ່ ໆ.

ຈາກນັ້ນ ໃນໄລຍະປີທີ 1-2 ຄວນເອົາໃຈໃສ່ໃນການເສັຍ ຫຍ້າ

ພວນດິນ ແລະ ຕັດແຫນງ ກິ່ງງ່າທີ່ເຫນົ່າ,ງ່າຕາຍອອກ ແລະ ກໍຄວນທົດນ້ຳຖ້າຫາກເຫັນວ່າດິນແຫ້ງ ຫລື ບໍ່ມີຝົນຕົກ.

<u>ການໃສ່ຝຸ່ນ</u> : ອັດຕາຝຸ່ນຄອກ ຫລືຝຸ່ນບົ່ມປະມານ 3-4 ກິ ໂລກຼາມ/ 1 ຂຸມ ອີງໃສ່ໃນຕົ້ນລະດູຝົນ ນອກຈາກນັ້ນອາດຈະໃສ່ປຸ໋ຍສູດ 8 - 10-5 ຫລື 15-15-15 ໃນອັດຕາ 200-300 ກຼາມ/ຕົ້ນ. ໃສ່ ອ້ອມບໍລິເວນຊົງພຸ່ມ.

<u>ການໃຫ້ຫມາກ</u> : ໃນພື້ນທີ່ສ່ວນທີ່ເປັນດິນດີ ແລະ ໄດ້ຮັບການບົວລະບັດຮັກສາດີ ຫມາກຂຽບຈະເລີ່ມໃຫ້ຫມາກໃນ 1 - 2 ປີຫລັງ ຈາກປູກ ແລະ ຈະໄດ້ຜົນຜະລິດສູງໃນປີທີ 3 ເປັນຕົ້ນໄປ.

ຫມາກຂຽບຈະເລີ່ມອອກດອກໃນຕົ້ນລະດູຝົນ ແລະອອກເປັນ 2 ຊຸດ ໆທຳອິດຈະໃຫ້ຫມາກຫນ້ອຍແຕ່ຫນ່ວຍໃຫຍ່ ແຕ່ຊຸດທີ 2 ຈະໃຫ້ຫມາກຫລາຍແຕ່ຫນ່ວຍນ້ອຍ.

<u>ພະຍາດ ແລະ ແມງໄມ້ຂອງຫມາກຂຽບ</u> :

- ພະຍາດ ຮາກເປື່ອຍ ສ່ວນຫລາຍມັກເກີດເວລາຕົ້ນຍັງ ນ້ອຍ ຫລື ເປັຍ ແຊ່ນ້ຳເກີນໄປ.
- ເຊື້ອລາດຳ ມັກເກີດຢູ່ຫມາກ, ກ້ານໃບ, ຍອດ.

<u>ວິທີປ້ອງກັນ</u> : ຄວນໃຊ້ຢາ ບອກໂດຟຸ່ນ 3-5 ບ່ວງແກງຕໍ່ ນ້ຳ 20 ລິດ ສີດໃສ່ບ່ອນບໍລິເວນທີ່ມີ ຊຶ່ງສີດ 2-3 ເທື່ອ ໄລຍະຫ່າງກັນ ປະມານ 5-7 ມື້ຕໍ່ເທື່ອ.

<u>ແມງໄມ້</u> :

- ເພັ້ຍອ່ອນ: ເຊັ່ນປະເພດເພັ້ຍແປ້ງ, ເພັ້ຍຫອຍ ມັກຈະ ເກີດໃນບໍລິເວນ ຍອດອ່ອນ, ກ້ານໃບ ແລະ ຫມາກ.
- ບົ້ງເຈາະລຳຕົ້ນ :

ນອກຈາກນັ້ນກໍຍັງມີຈຳພວກ ມົດ, ນົກ ມັກມາທຳລາຍເວລາຫມາກ

ສຸກແກ່.

ວິທີປ້ອງກັນ : ຄວນໃຊ້ຢາເຊວິນ 85% ( ຄາບາຣິນ ) ປະມານ 1 ບ່ວງແກງ ຕໍ່ນ້ຳ 20 ລິດ ສີດຕອນເຊົ້າ ຫລື ດິແຫັແມ່ນ ຕອນແລງ.

# ວິທີປູກຫມາກລຳໄຍ

ຄຸນຄ່າທາງດ້ານອາຫານຂອງລຳໄຍ ແມ່ນມີທາດຊີ້ນ 0,9% ໄຂມັນ 0,1% ທາດແປ້ງ 15,4% ແຣ່ທາດອື່ນ ໆ 0,3%.

<u>ສະພາບດິນຟ້າອາກາດ</u> :

1. ດິນ. ລຳໄຍເປັນພືດທີ່ຕ້ອງການດິນມີຄວາມອຸດົມສົມບູນ ສູງເຖິງປານກາງເຊັ່ນ: ດິນລ້ວນ, ດິນລ້ວນປົນຊາຍ ຫລື ດິນລ້ວນປົນຫນຽວ ຖ້າເປັນດິນຫນຽວກໍຄວນຈັດລະບົບນ້ຳຊົນລະປະທານເອົາເຂົ້າ ເອົາ ອອກໃຫ້ໄດ້ສະດວກ.

2. ນ້ຳ. ໃນເຂດທີ່ມີປະລິມານນ້ຳຝົນ 1.200-1.500 ມມ ຕໍ່ປີໃນໄລຍະ 100-500 ວັນ ຕໍ່ປີແມ່ນເຫມາະສົມຕໍ່ການປູກລຳໄຍ ບໍ່ດັ່ງນັ້ນຖ້າຫາກມີປະລິມານນ້ຳຝົນຫນ້ອຍຈຳຕ້ອງໄດ້ມີຊົນລະປະທານເພື່ອ ສະຫນອງນ້ຳໃຫ້ແກ່ຕົ້ນພືດ. ລຳໄຍຕ້ອງການນ້ຳຫລາຍແມ່ນໃນທ້ອງເດືອນ ມີນາເຖິງເດືອນເມຖຸນາ ເພາະໃນຊ່ວງນີ້ ອາກາດຮ້ອນຄວາມຊຸ່ມຂອງ ອາກາດຕ່ຳ ຈຶ່ງເຮັດໃຫ້ດອກຕົກຫລົ່ນໄດ້ງ່າຍ.

3. ອຸ່ນຫະພູມ. ລຳໄຍຈະເລີນເຕີບໂຕໄດ້ດີ, ອອກດອກ ຫລາຍໃຫ້ຫມາກຫລາຍ ແມ່ນສະພາບອຸ່ນຫະພູມຂອງອາກາດສະເລ່ຍປະມານ20-25 ອົງສາເຊ ແຕ່ໃນຊ່ວງເວລາອອກດອກ ລຳໄຍຕ້ອງການອຸ່ນຫະ ພູມ

ຕ່ຳເຖິງ 10 ອົງສາເຊ ເວລາຕົກໜາກແລ້ວອຸ່ນທະພູມຈະສູງເຖິງ 40 ອົງສາເຊ ກໍສາມາດໃຫ້ຜົນຜະລິດສູງໄດ້.

ລະດູປູກ : ການປູກລຳໄຍຄວນປູກໃນທ້າຍລະດູຝົນ ເພາະເວລານີ້ ດິນມີຄວາມອຸ່ມ, ອາກາດຄ່ອຍ ໆເລີ່ມປ່ຽນຈາກຮ້ອນມາເປັນເວລາດຽວກັນນີ້ ຕົ້ນລຳໄຍແມ່ນເກີດໃບອ່ອນໄດ້ດີກວ່າ, ການລະບາດຂອງແມງໄມ້ກໍລົດນ້ອຍຖອຍລົງ. ແຕ່ຖ້າໃນພື້ນທີ່ມີນ້ຳອຸ້ມລະປະທານອາດຈະປູກ ເວລາໃດກໍໄດ້ແຕ່ຄວນລະມັດລະວັງແມງໄມ້ ແລະ ພະຍາດມາລົບກວນ.

ກ່ຽວກັບແນວພັນ :

ລຳໄຍແບ່ງອອກເປັນ 2 ປະເພດເຊັ່ນ:

1. ລຳໄຍເຄືອ. ເປັນລຳໄຍທີ່ມີໜ່ວຍນ້ອຍນວນໜ້ອຍແຕ່ ແກ່ນໃຫຍ່ ມີກິ່ນຂີວຄ້າຍຄືກັບກິນມາດ. ສ່ວນຫລາຍນັກນິຍົມປູກເປັນໄມ້ປະດັບ.

2. ລຳໄຍຕົ້ນ. ແບ່ງອອກເປັນ 2 ຊະນິດຄື:

- ລຳໄຍພື້ນເມືອງ : ເປັນລຳໄຍທີ່ມີໝາກນ້ອຍ ນວນໜ້ອຍແກ່ນໃຫຍ່ ລຳຕົ້ນຈີເປືອກຫຸ້ມລຳຕົ້ນ ມັກແຕກເປັນກາບ. ສ່ວນຫລາຍນິຍົມໃຊ້ເປັນຕົ້ນຕໍ.

- ລຳໄຍໃຫຍ່ ( ລຳໄຍ ທີ່ຖືກປັບປຸງແລ້ວ ). ປັດຈຸບັນມີຫລາຍແນວພັນເຊັ່ນ: ພັນອີດໍ, ພັນແຫ້ວ, ພັນສີຊົມພູ ພັນບ້ຽວຂຽວ ເຫລົ່ານີ້ເປັນຕົ້ນ.

ການຂະຫຍາຍພັນ : ການຂະຫຍາຍພັນລຳໄຍເຮັດໄດ້ຫລາຍວິທີ

1. ການຕອນງ່າ (ໂຫນງ່າ) ໃນປັດຈຸບັນຍັງນິຍົມ ໃຊ້ງ່າຕອນໄປປູກເປັນສວນຫລາຍ ໂດຍໃຊ້ງ່າທີ່ມີອາຍຸປະມານ 8-12 ເດືອນ ຈາກຕົ້ນທີ່ບໍ່ມີພະຍາດລົບກວນ. ກ່ອນຈະຕອນຄວນແຊ່ກາບພ້າວໄວ້ປະມານ 3 - 4 ເດືອນ ຫລືໃຊ້ວິທີຕົ້ມຢ່າງຕ່ຳບໍ່ໃຫ້ຫລຸດ 3 ຊົ່ວໂມງ.

<u>ວິທີຕອນ</u> : ເມື່ອເລືອກງ່າທີ່ຕ້ອງການແລ້ວຊຶ່ງປອດຈາກພະຍາດ ແມງໄມ້ລົບກວນ.

ໃຊ້ມີດຫັນອ້ອມເປືອກຂອງງ່າລຳໄຍ 2 ບ່ອນຫ່າງກັນປະມານ 2-5 ຊຕມ ຂຶ້ນກັບຄວາມໃຫຍ່ຂອງງ່າ ແລະ ໃຫ້ງ່າມີຄວາມຍາວແຕ່ ປາຍຮອດປາກ ປາດຕອນປະມານ 30-50 ຊຕມ. ຈາກນັ້ນກໍໃຊ້ປາຍມີດແກະເປືອກອອກ ໃຊ້ຄົມມີດຂູດແກນຂອງງ່າແຕ່ເທິງລົງລຸ່ມ.

ຈາກນີ້ກໍ ໃຊ້ດິນໜຽວ (ດີແທ້ແມ່ນໃຊ້ດິນໂພນຈູມປວກ) ຫຸ້ມປາກບາດດ້ານເທິງ ຕໍ່ມາກໍໃຊ້ກາບພ້າວທີ່ກຽມໄວ້ມາຫໍ່.

ໃຊ້ແຜ່ນຢາງຊະນິດໜານາຫຸ້ມອີກ, ມັດດ້ານລຸ່ມ ແລະ ດ້ານເທິງດ້ວຍເຊືອກຟາງ ຫລືໄມ້ຕອກໃຫ້ແໜ້ນປະໄວ້ປະມານ 8-10 ອາທິດເຫັນວ່າງ່າຕອນເກີດຮາກ ຈຶ່ງຕັດໄປຊຳປະໄວ້ປະມານ 1-2 ເດືອນແລ້ວ ຈຶ່ງນຳໄປປູກ.

ການປູກລຳໄຍດ້ວຍງ່າຕອນຄວນເຣັດຮາກເສີມກຳລັງໄປພ້ອມ ກັນ ທັງນີ້ກໍຍ້ອນ ງ່າຕອນມີແຕ່ລະບົບຮາກຝອຍ, ບໍ່ສາມາດ ຊູລຳຕົ້ນໄດ້ເທົ່າທີ່ຄວນ, ບໍ່ສາມາດດູດທາດອາຫານ ແລະ ນຳໄປລ້ຽງລຳຕົ້ນໄດ້ດີ.

ວິທີເຣັດຮາກສຳຮອງແມ່ນໃຊ້ແກ່ນລຳໄຍພື້ນເມືອງປູກລົງໃກ້ ໆກັບ ງ່າຕອນທີ່ປູກນັ້ນ ພໍເມື່ອຕົ້ນຫາກໃຫຍ່ຈະເລີນເຕີບໂຕດີແລ້ວກໍໂນ້ມຕົ້ນ ທັງສອງຕິດເຂົ້າກັນ ດ້ວຍວິທີປາດຂ້າງຂອງລຳຕົ້ນແຕ່ລະຕົ້ນປະມານ 4 ຊຕມ ໃຊ້ເຊືອກ ຫລືຢາງຄຽນໃຫ້ແໜ້ນເຫັນວ່າມັນຕິດຈອດກັນດີແລ້ວ ຈຶ່ງ ຕັດຍອດຂອງຕົ້ນທີ່ໃຊ້ແກ່ນປູກນັ້ນອອກ (ໃຊ້ເວລາປະມານ 2-3 ເດືອນ).

<u>ການທາບງ່າ</u> : ເປັນວິທີທີ່ງ່າຍ ແລະ ໄດ້ຜົນດີ. ວິທີທາບແມ່ນ ປາດງ່າຕົ້ນຕໍ່ ແລະ ຕົ້ນພັນ ໃຫ້ຍາວເທົ່າ ໆກັນ ແລ້ວນຳປາກບາດ ມາປະແປະເຂົ້າກັນແລ້ວເອົາເຊືອກ ຫລືຢາງຄຽນໃຫ້ແໜ້ນ. ຂະບວນ ການກະກຽມຕົ້ນຕໍ່ກໍຄ້າຍຄືກັບພືດອື່ນ ໆ.

ການຕໍ່ ຫລືສຽບງ່າ : ເບື້ອງຕົ້ນແມ່ນກ້າແກ່ນລຳໄຍໃສ່ຖົງ ຫລື ພາຊະນະອື່ນ ເພື່ອໃຊ້ເປັນຕົ້ນຕໍ. ເມື່ອຕົ້ນຕໍໃຫຍ່ເທົ່າກັບສໍດຳ ຫລືມີເສັ້ນຜ່າສູນກາງປະມານ 1 ຊຕມ ກໍຕັດຍອດອອກ, ຈື່ງຕໍໄວ້ປະມານ 5-10ຊຕມ ຈາກປາກຖົງ. ໃຊ້ເຊືອກຟາງມັດປາຍຕົ້ນຕໍ່ (ຫ່າງຈາກສົ້ນປະ ມານ 2-3 ຊຕມ). ເພື່ອປ້ອງກັນບໍ່ໃຫ້ຈີກ ຫລືແລ່ງ ເວລາຜ່າເພື່ອນຳງ່າ ມາສຽບໃສ່.

ການຕຽມຍອດມາສຽບ ແມ່ນຕັດຍອດພັນດີຍາວປະມານ 8-10 ຊຕມ ໃຊ້ມີດຄົມ ໆປາດເປັນຮູບຫລິ້ມສົ້ນແຫລມຍາວເທົ່າກັບປາກປາດທີ່ ຜ່າຕົ້ນຕໍໄວ້ແລ້ວນັ້ນ. ຈາກນັ້ນກໍນຳມາສຽບໃຫ້ແຈບເຂົ້າກັນເປັນຢ່າງ ດີ (ເປືອກຕໍ່ເປືອກດ້ານຂ້າງໃຫ້ຕິດກັນ ເບື້ອງໃດນຶ່ງ). ໃຊ້ຢາງຄຽນ ໃຫ້ແໜ້ນໃນບໍລິເວນ ບ່ອນຕໍ່ກັນນັ້ນ. ຈາກນັ້ນກໍໃຊ້ຖົງຢາງມາມັດຫຸ້ມ ຍອດສຽບນັ້ນໄວ້ ເພື່ອປ້ອງກັນບໍ່ໃຫ້ມີການແຫ້ງ ຫລືລະເຫີຍຂອງນ້ຳຈາກ ງ່າພັນດີທີ່ນຳມາສຽບນັ້ນ. ປະມານ 25-30 ວັນ ເມື່ອເວລາຍອດພັນດີເຫັນວ່າຕິດ, ຈະເລີ່ມເຕີບໂຕຂຶ້ນຈົນຄັບຖົງຢາງແລ້ວຈື່ງເອົາຖົງຢາງນັ້ນອອກ. ຈາກນີ້ປະມານ 2 ເດືອນຈື່ງນຳໄປປູກໄດ້.

<u>ວິທີປູກ ແລະ ຕຽມດິນ</u> :

ດິນທີ່ຈະປູກກໍຄວນເປັນດິນທີ່ລະບາຍນ້ຳໄດ້ດີ, ຂຸມກໍຕ້ອງກວ້າງ ພໍດີເພື່ອສະສົມທາດອາຫານຂອງພືດ,

ໄລຍະປູກ ແມ່ນຂຶ້ນກັບຄວາມອຸດົມສົມບູນຂອງດິນ, ແນວພັນທີ່ ຈະໃຊ້ປູກ, ນ້ຳ ແລະ ປະລິມານຕົ້ນທີ່ຕ້ອງການ. ປົກກະຕິປັດຈຸບັນມັກນິຍົມກັນປູກໃນໄລຍະ 12×12 ແມັດ, 16×16 ແມັດຫລື 12×6 ແມັດ. ຖ້າປູກດ້ວຍງ່າຕອນ ຈະເປັນໝາກໃນປີທີ 3.

ການຕຽມດິນ ຫລື ຂຸມ. ຂະໜາດຂອງຂຸມແມ່ນ 1 ແມັດ (1 × 1 × 1) ແມັດ ເອົາດິນຊັ້ນເທິງລົງກົ້ນຂຸມແລ້ວ ແບ່ງດິນຊັ້ນລຸ່ມທີ່ຂຸດ ຂຶ້ນ

ມາປະສົມກັບຝຸ່ນຄອກ ທີ່ຝຸ່ນບົ່ມ ແລະ ເສດພືດຕ່າງ ໆທີ່ເໜົ່າເປື່ອຍແລ້ວ ນັ້ນລົງຂຸມ ຈົນເຕັມຈຶ່ງປູກຕົ້ນລຳໄຍ.

<u>ການບົວລະບັດຮັກສາ</u> :

ຫລັງຈາກປູກໄດ້ 1 ປີ ເຫັນວ່າຕົ້ນລຳໄຍຈະເລີນເຕີບໂຕສົມ ບູນ ດີແລ້ວ ຄວນເລີ່ມຕັດແຕ່ງຮູບຊົງຂອງຝຸ່ນ ໂດຍຕັດງ່າທີ່ແກກການ ເຫງົ້າ ແລະ ດ້ານລຸ່ມອອກຫມົດໃຫ້ປະໄວ້ສູງຈາກໜ້າດິນ 90–100 ຊຕມ ໃຫ້ ເຫລືອໄວ້ແຕ່ 3–4 ງ່າເທົ່ານັ້ນ.

ການຕັດແຕ່ງຝຸ່ນ: ຄວນປະຕິບັດກັນໃນລະດູຝົນ ແລະ ໃຫ້ຕັດແຕ່ງ ໄປເລື້ອຍ ໆໃນລະຍະ 3–4 ປີ.

ການໃສ່ຝຸ່ນ . ຄວນໃສ່ຝຸ່ນປີລະ 2 ຄັ້ງຢ່າງຕ່ຳເຊັ່ນ: ໃສ່ຕົ້ນລະ ດູຝົນ ແລະ ຫລັງຈາກເກັບຫມາກສຳເລັດ. ສຳລັບຝຸ່ນທີ່ນຳໃຊ້ຕໍ່ລຳໄຍ ນັ້ນ ແມ່ນຈຳເປັນທີ່ສຸດທີ່ຕ້ອງໃຊ້ຝຸ່ນຄອກ ແລະ ຝຸ່ນບົ່ມ ເພາະຝຸ່ນດັ່ງກ່າວ ນັ້ນ ຊ່ວຍປັບປຸງດິນໃຫ້ຮັກສານ້ຳໄດ້ ເກັບຄວາມຊຸ່ມຊື່ນຂອງດິນໄດ້ດີ ແລະ ຖ້າ ຈຳເປັນແມ່ນໃສ່ປຸ໋ຍເຄມີປະສົມເຂົ້ານຳ.

ເມື່ອເວລາຕົ້ນລຳໄຍຍັງນ້ອຍມີຄວາມຕ້ອງການທາດອາຫານ ເພື່ອ ລ້ຽງໃບ ແລະ ລຳຕົ້ນ ດັ່ງນັ້ນຄວນໃສ່ຝຸ່ນປະເພດອາໂຊດ ( **N** ) ແລະ ກາລີ ( **K** ) (ຕ້ອງໃສ່ຂື້ເທົ່າທຸກ ໆປີ). ເວລາໃກ້ຈະອອກດອກລຳ ໄຍ ຕ້ອງການຝຸ່ນຟອດສະຟໍ ( **P** ) ຫລາຍຂຶ້ນ, ອັດຕາຝຸ່ນແມ່ນໂດຍປະ ມານ ຂຸມລະ 100–1.000 ກຼາມ/ປີ ຂອງຝຸ່ນສູດ *15-15-15* ຫລື 13–13– 13.

<u>ການປ້ອງກັນ ແລະ ຈຳກັດພະຍາດແມງໄມ້</u> :

ພະຍາດລຳໄຍແມ່ນວ່າມີຫນ້ອຍທີ່ສຸດ ດັ່ງທີ່ໄດ້ພົບໃນປັດຈຸບັນ ແມ່ນ ພະຍາດໃບກູດ (ຍອດກູດ). ມີອາການທີ່ຍອດຈະເກີດເປັນຝອຍສີນ້ຳຕານ ປົກຄຸມຕາມຍອດໃນທີ່ສຸດຍອດກໍຕາຍ, ຖ້າວ່າພະຍາດນີ້ຫາກມີປາກົດ ຂຶ້ນ

ຄວນຕັດຍອດນັ້ນຖິ້ມ ແລະ ຢ່າຂະຫຍາຍພັນຈາກງ່ານີ້ເປັນເດັດຂາດ.

ແມງໄມ້ທີ່ພົບທົ່ວໄປນຳຕົ້ນລຳໄຍແມ່ນມີຫລາຍຊະນິດເຊັ່ນວ່າ. ໄຣແດງ - ຈະລະບາດໃນລະດູແລ້ງ ຖ້າມີຝົນຕົກກໍ່ລະຫາຍໄປ.

- ໄຣລຳໄຍ - ເປັນແມງໄມ້ຕົວນ້ອຍສີເຫລືອງອ່ອນ. ມັກຢູ່ຕາມກ້ອງໃບຮວມຕົວກັນເປັນຈຸດ ໆ. ວິທີປາບແມ່ນໃຊ້ຢາປະເພດດູດຊຶມ ເຊັ່ນ ໄດເມນໂທຣອດ, ໄບດຣິນ, ອະໂຣເກີ, ເຟີເຟດ ໄທອອນ ສີດຕາມຄຳແນະນຳຢູ່ໃນຢາ.

- ເພັ້ຍ ມັກຈະເກີດຄຽງຄູ່ກັບມົດ. ປະເພດເພັ້ຍມັກພົບແມ່ນເພັ້ຍຫອຍ ແລະ ເພັ້ຍແປ້ງ. ໃຫ້ໃຊ້ຢາສີດປະເພດດູດຊຶມ.

- ບົ້ງເຈາະງ່າ. ພວກນີ້ມັກຈະລະບາດເປັນປະຈຳ.

- ບົ້ງເຈາະເປືອກລຳຕົ້ນ. ສຳລັບບົ້ງປະເພດເຈາະງ່າ ແລະ ເຈາະເປືອກຂອງລຳຕົ້ນນີ້ຄວນໃຊ້ຢາປະເພດດູດຊຶມ ສີດ ຫລືໃສ່ນຳດິນ ບໍລິເວນຮາກອີກວິທີນຶ່ງແມ່ນໃຊ້ຢາປະເພດຖືກໂຕຕາຍ ຊຶ່ງປະສົມນ້ຳໃນ ອັດຕາ 1:1. ແລ້ວໃຊ້ເຂັມສັກຢາສີດເຂົ້າໄປຕາມຮູຂອງດ້ວງ ຫລືບົ້ງເຈາະນັ້ນ.

- ແມງໄມ້ປີກແຂງ ເຊັ່ນວ່າ ແມງກິນູນ, ແມງຄ່ອມທອງ ນອກຈາກນີ້ກໍຍັງມີ ບົ້ງຄືບປະເພດກັດກິນໃບອ່ອນ. ວິທີປາບແມ່ນໃຊ້ຢາ ຄາບາຣິນ (ເຊວິນ 85%) ສີດ.

<u>ສັດຕູພືດທີ່ທຳລາຍໃນລະຍະເປັນດອກ</u> :

- ບົ້ງກິນດອກລຳໄຍ ເປັນບົ້ງປະເພດທີ່ໄຂອອກຈາກແມງກະເບື້ອ ມັກທຳລາຍໃບໃນໄລຍະກຳລັງຈູມດອກ.

- ບົ້ງເຈາະກ້ານດອກ. ເປັນບົ້ງຕົວນ້ອຍ ເທົ່າກັບເສັ້ນດ້າຍ. ຖ້າຫາກເກີດບົ້ງຊະນິດນີ້ທຳລາຍ ລຳໄຍຈະບໍ່ຕິດໝາກ ວິທີປ້ອງກັນແມ່ນ ສີດຢາໃນເວລາເລີ່ມຈໍ່ພ້ວດອກ.

ສັດຕູພືດທີ່ທຳລາຍໄລຍະດອກບານ ແລະ ໝາກສຸກແກ່ :

ໃນລະຍະດອກບານ ມັກຈະມີແມງແຄງມາທຳລາຍ (ແມງ ແຄງໃຫຍ່ທີ່ມັກເກີດຕາມຕົ້ນໝາກແງວ).

ໃນລະຍະໝາກສຸກແກ່. ໜ່ວຍລະໄຍກຳລັງເລີ່ມຫວານມັກຈະ ມີແມງວັນທອງ ແລະ ແມງກະເບື້ອດູດນ້ຳຫວານມາເຈາະໜ່ວຍລຳໄຍ ວິທີປ້ອງກັນກັບດັກ (          ) ໃນເວລາກາງຄືນ (ຖ້າໃຊ້ຢາສີດອາດຈະມີສານພິດຕົກຄ້າງຕາມໜ່ວຍລຳໄຍ).

ການເກັບກ່ຽວລຳໄຍ : ເວລາລຳໄຍເລີ່ມອອກດອກຫາສຸກ ແກ່ຈະໃຊ້ເວລາປະມານ 5 ເດືອນ. ການເກັບຄວນແບ່ງເປັນ 2 ໄລຍະ (ເກັບ 2 ເທື່ອ) ຫ່າງກັນເທື່ອລະ 8–10 ວັນ.

ຂໍ້ຄວນລະວັງໃນການເກັບ :

1. ບໍ່ຄວນເກັບລຳໄຍໃນມື້ມີຝົນຕົກ.
2. ບໍ່ຄວນປະລຳໄຍຄ້າງໄວ້ໃຫ້ສຸກໃນຕົ້ນດົນເກີນໄປບໍ່ດັ່ງນັ້ນ ລຳໄຍຈະມີຄວາມຫວານໜ້ອຍລົງ.
3. ເວລາເກັບບໍ່ຄວນຫັກງ່າລຳໄຍ ໃຫ້ປິດ ຫລືຕັດໃນບໍລິ ເວນກ້ານຂອງພວງໝາກ.
4. ຄວນເກັບລຳໄຍຕອນເຊົ້າ ຫລືຕອນແລງ.
5. ເຄື່ອງມືໃຊ້ຕັດພວງລຳໄຍຄວນໃຊ້ມີດຕັດຈາກນັ້ນກໍຣີບສົ່ງ ຕະ ທັນທີ, ບໍ່ດັ່ງນັ້ນຄຸນນະພາບກໍຈະຕົກຕ່ຳ.

# ວິທີປູກໝາກກະທັນ

ປະຫວັດຄວາມເປັນມາ ແລະ ຄຸນຄ່າທາງດ້ານອາຫານ :

ຕົ້ນກະທັນເປັນພືດປ່າ, ກ່ອນນີ້ 4.000 ປີ ໝາກກະທັນໄດ້ ຖືກ ນຳມາປູກເປັນພືດບໍລິໂພກຢູ່ປະເທດຈີນ. ໝາກກະທັນມີປະມານ 400ຊະນິດ. ສຳລັບດ້ານຄຸນຄ່າທາງອາຫານ ແມ່ນນອກຈາກເປັນໝາກໄມ້ທີ່ເປັນອາຫານບຳລຸງແລ້ວຍັງນຳໃຊ້ເຂົ້າໃນການປຸງແຕ່ງຢາປະເພດແກ້ເຈັບທ້ອງ ທາດອາຫານບັນຈຸຢູ່ໝາກກະທັນ ສ່ວນຫລາຍແມ່ນຈະມີທາດແຫ້ງ 23-30% ໃນນີ້ຈະບັນຈຸທາດນ້ຳຕານ 21-62% ທາດຊີ້ນ 3% ທາດສົ້ມ 6%, ວິຕາມິນເຊ 300-800 ມິລີກຼາມ/ກຼາມ. ວິຕາມິນເປ (PP) 25 - 100 ມິລີກຼາມ/ 100 ກຼາມ ແລະ ທາດເຫລັກປະມານ 5-7 ມິລີ ກຼາມ ຕໍ່ 100 ກຼາມ.

ລັກສະນະທາງພືກສາກຂອງໝາກກະທັນ :

ກະທັນເປັນຕົ້ນໄມ້ຂະໜາດກາງ (ເຄິ່ງພຸ່ມເຄິ່ງໄມ້ໃຫຍ່). ມີຄວາມສູງປະມານ 4-5 ແມັດ ແລະ ຫລາຍກ່ວາທົນທານຕໍ່ຄວາມ ແຫ້ງແລ້ງ (drydistrict) ກິ່ງງ່າ ແລະ ແໜງ ເກີດຈາກລຳຕົ້ນ, ແໜງທີ່ແຕກໃໝ່ ມີສີແດງ ແລ້ວປ່ຽນເປັນສີຂຽວ. ໝາກມີລັກສະນະກົມ, ຍາວ ໃບດ້ານເທິງເປັນມັນພື້ນເປັນສີໂນກ, ຂຽວອ່ອນ. ຊໍດອກອອກຕາມກິ່ງງ່າ

ໃຫຍ່ ແລະ ນ້ອຍ. ກິ່ນຂອງດອກສ່ວນຫລາຍມີກິ່ນເໝັນ ເມື່ອເວລາ ມີການປະສົມພັນແລ້ວກິ່ນເຫລົ່ານັ້ນກໍຄ່ອຍ ໆລົດຜ່ອຍໄປຕາມລຳດັບ. ແກ່ນມີກາບແຂງຕິດກັບນວນ ພາຍໃນແກ່ນແບ່ງອອກເປັນ 2 ຫ້ອງ. ແຕ່ລະຫ້ອງມີ 1 ຈາວ.

ສະພາບດິນຟ້າອາກາດ : ດິນທີ່ເໝາະສົມທີ່ສຸດແມ່ນດິນປະເພດຊາຍແກມຕົມ ເປັນດິນທີ່ລະບາຍນ້ຳໄດ້ດີ, ຄວາມເປັນກົດເປັນດ່າງຂອງດິນແມ່ນ PH 6-6,5 ຕົ້ນກະທັນເປັນພືດທີ່ມັກແສງ. ເວົ້າລວມແລ້ວ ຕົ້ນກະທັນສາມາດເກີດໄດ້ໃນດິນທຸກຊະນິດ ແຕ່ຄຸນນະພາບ ແລະ ຜົນຜະລິດຈະແຕກຕ່າງໃນແຕ່ລະທ້ອງຖິ່ນ.

ການຂະຫຍາຍພັນ : ໂດຍທົ່ວໄປແລ້ວການຂະຫຍາຍພັນແມ່ນສາມາດແບ່ງອອກເປັນຫລາຍວິທີເຊັ່ນ:

1. ວິທີຂະຫຍາຍດ້ວຍແກ່ນ. ການຂະຫຍາຍດ້ວຍວິທີນີ້ແມ່ນມີຂໍ້ດີເຊັ່ນ ລຳຕົ້ນແຂງແຮງມີລະບົບຮາກດີ. ແຕ່ຂໍ້ບົກພ່ອງແມ່ນ ບໍ່ສາມາດສືບຕໍ່ພັນເດີມໄດ້, ໃຫ້ຜົນຜະລິດຊ້າ ແລະ ໜ້ອຍ. ສ່ວນຫລາຍວິທີກ້າແກ່ນນີ້ແມ່ນໃຊ້ເຮັດຕົ້ນຕໍ ເພື່ອທາບກິ່ງ, ຕິດຕາ, ສຽບຍອດ ຫລື ສຽບຂ້າງ

2. ການຂະຫຍາຍດ້ວຍການຕິດຕາ. ວິທີນີ້ ມີຂໍ້ດີຢູ່ເຊັ່ນ: ໃຫ້ຜົນຜະລິດໄວ, ກຳນົດ ແລະ ຄັດເລືອກພັນທີ່ຈະໃຊ້ໄດ້ຕາມໃຈ, ຄຸນນະພາບຂອງໝາກດີ. ຂໍ້ບົກພ່ອງແມ່ນລຳຕົ້ນອາດຫັກ ຫລືຈີກງ່າຍທີ່ບໍລິເວນຕິດຕາໃນເວລາມີຟ້າລົມ ຫລືສະພາບແວດລ້ອມບໍ່ອຳນວຍຈົນຮອດການ ບົວລະບັດຮັກສາຕ້ອງໄດ້ລະມັດລະວັງ.

3. ການຂະຫຍາຍພັນດ້ວຍການທາບກິ່ງງ່າ. ຂໍ້ດີແມ່ນຄ້າຍ ໆ ກັບການຕິດຕາ ແຕ່ມີຂໍ້ບົກພ່ອງຕ່າງກັນເຊັ່ນ: ຂະບວນ ແລະ ວິທີການ ມີຫລາຍຂັ້ນຕອນກວ່າ ຍ້ອນວ່າຕ້ອງໄດ້ຕຽມກາບພ້າວ, ຕ້ອງໄດ້ຊຳໄວ້ ໃນຮື່ມ ຫລັງຈາກຕັດອອກຈາກຕົ້ນທາມ. ເພາະສະນັ້ນວິທີນີ້ ນິຍົມກັນໃນປັດຈຸ

ບັນແມ່ນການຕິດຕາ.

<u>ການປູກ</u> :

ໄລຍະປູກແມ່ນອີງຕາມສະພາບຄວາມອຸດົມສົມບູນຂອງດິນຖ້າ ເປັນດິນທີ່ບໍ່ອຸດົມສົມບູນຄວນໃຊ້ໄລຍະຖີ່ ເຊັ່ນ: 6×6 ແມັດ ຫລື 7×7 ແມັດ.

ການກຽມດິນ ຫລືຂຸດຂຸມປູກ ແມ່ນປະຕິບັດຄືກັບປູກຕົ້ນໄມ້ຊະນິດອື່ນໆ ເຊັ່ນ: ການປະສົມຝຸ່ນຄອກລົງຂຸມເບື້ອງຕົ້ນກໍແມ່ນໃສ່ ອັດຕາ 1:1.

<u>ການບົວລະບັດຮັກສາ</u> :

ການເສັຍຫຍ້າ: ຫລັງຈາກປູກໄດ້ປະມານ 2-3 ເດືອນຄວນ ເສັຍຫຍ້າອ້ອມຕົ້ນກະທັນເປັນຄັ້ງທຳອິດ ຫລັງຈາກນັ້ນກໍຄວນມີການພວນດິນຕາມຫວ່າງຕົ້ນ.

ການໃສ່ຝຸ່ນ: ແມ່ນປະຕິບັດຫລັງຈາກເສັຍຫຍ້າພວນດິນ, ແຕ່ຄວນລະມັດລະວັງໃນການໃສ່ເພາະວ່າຫລັງຈາກເກັບກ່ຽວແມ່ນຕ້ອງໄດ້ຕັດ ຕົ້ນເກົ່າອອກ ເພາະສະນັ້ນບໍ່ຄວນໃສ່ຝຸ່ນໃກ້ຕົ້ນ ຄວນຫມາຍເຂດຂອງຮົ່ງ ຝຸ່ນໄວ້ແລ້ວໃສ່ຕາມຮົ່ງຝຸ່ນຕົກ ຫລື ຫ່າງຈາກຕົ້ນປະມານ 35 ຊຕມ ອາດຈະໃສ່ເປັນຮ່ອງອ້ອມ ຫລືເຮັດເປັນຈຸດ. ຝຸ່ນທີ່ໃຊ້ສ່ວນຫລາຍແມ່ນ 15-15-15 ໃນອັດຕາ 300-400 ກຼາມ/ຕໍ່ 1 ຂຸມ.

ການຕັດແຕ່ງ: ການຕັດແຕ່ງເປັນບັນຫາສຳຄັນ ທີ່ສຸດຕໍ່ບັນຫາ ຄຸນນະພາບ ແລະ ປະລິມານຂອງຜົນຜະລິດຕໍ່ຕົ້ນ ດັ່ງນັ້ນວິທີ ແລະ ຂັ້ນ ຕອນມີດັ່ງນີ້:

* ຕັດແຕ່ງເວລາຕົ້ນຫມາກກະທັນມີອາຍຸ 3 ປີ ໃຫ້ຕັດລຳຕົ້ນອອກຫມົດ, ໃຫ້ຍັງເຫລືອແຕ່ 30 ຊຕມ ຈາກຫນ້າດິນ. ແຕ່ຄວນສັງເກດ ວ່າຕົ້ນກະທັນປູກດ້ວຍການຕິດຕາ ຫລືທາບກິ່ງ ບໍ່ຄວນຕັດຕ່ຳກ່ວາຕາ ຫລື ກິ່ງ ງ່າແນວພັນ. ຈາກນັ້ນປີທີ 3 ຕໍ່ໆໄປແມ່ນໃຫ້ຕັດສູງຂຶ້ນຈາກລະດັບ ເດີມ

5-10 ຊຕມ. ຫລັງຈາກຕັດໄດ້ 1-2 ເດືອນ ຈະມີແຫນງໃຫມ່ເກີດ ຂື້ນມາ ເຮົາຄວນ ເລືອກເອົາແຫນງໃຫຍ່ ແລະ ສົມບູນໄວ້ 4-5ແຫນງເພື່ອໃຫ້ພົນຜະລິດຕໍ່ໄປ, ນອກຈາກນັ້ນກໍໃຫ້ຕັດຖີ້ມຫມົດ. ສະເພາະແມ່ນແຫນງອອກຈາກຕົ້ນຕໍ່.

<u>ພະຍາດແມງໄມ້ ແລະ ວິທີປ້ອງກັນ</u> :

ພະຍາດທີ່ເກີດຈາກເຊື້ອຈຸລິນຊີ. ສາມາດພົບໃນຕົ້ນກະທັນຊຶ່ງ ມີອາການເປື່ອຍເປັນຈຸດ, ໃບກູດຫ່ຽວແຫ້ງ ບໍ່ສາມາດຈະເລີນເຕີບໂຕ ໄດ້ເປັນປົກກະຕິ ຫມາກກະທັນບໍ່ສົມບູນ.

ເຊື້ອລາ ມັກເຫັນຕາມໃບ ແລະ ເປືອກຂອງລຳຕົ້ນ ຫລື ກິ່ງງ່າ, ເຮັດໃຫ້ລຳຕົ້ນບໍ່ສົມບູນໃບເປັນຈຸດສີດຳ.

<u>ວິທີປ້ອງກັນ</u> : ຈຳພວກນີ້ແມ່ນຄວນໃຊ້ຢາ ທີລາຄໍ ໃນອັດຕາ 25 ກຼາມ/ 1 ລິດ ສີດທົ່ວບໍລິເວນພຸ່ມ.

ແມງໄມ້ : ສັດຕູພືດທີ່ມັກທຳລາຍແມ່ນ ພາກສ່ວນໃບ ແລະຫມາກ ເຊັ່ນບົ້ງຮຳໃບ, ບົ້ງເຈາະຫມາກ. ສາຍເຫດແມ່ນເກີດຈາກແມງ ກະເບື້ອ ແລະ ແມງວັນໝາກໄມ້.

<u>ວິທີປ້ອງກັນ</u> : ຄວນໃຊ້ຢາປະເພດ ເທີເຣັກ ປະສົມກັບນ້ຳໃນອັດຕາສ່ວນ 1/800 ສີດຕາມຫມາກ ແລະ ບໍລິເວນຕົ້ນທຸກ ໆອາທິດ.

<u>ການເກັບກ່ຽວ</u> : ຫມາກກະທັນແມ່ນເກັບກ່ຽວໄດ້ຫລາຍເທື່ອ ຕໍ່ຕົ້ນ ບໍ່ຄວນປ່ອຍໃຫ້ກະທັນສຸກຄາຕົ້ນເພາະ ການບໍລິໂພກຫມາກກະທັນ ພົມປັບປຸງນີ້ແມ່ນເວລາແກ່(ດິບ). ເປືອກຂອງຫມາກຈະມີສີຂຽວເລື້ອມ, ລັກຂະນະພ່ອຍ.

# ສາລະບານ


| | ໜ້າ |
|---|---|
| 1. ວິທີປູກໝາກຂາມຫວານ | 1 |
| 2. ວິທີປູກໝາກມ່ວງ | 16 |
| 3. ວິທີປູກໝາກຂຽບ | .22 |
| 4. ວິທີປູກໝາກລຳໄຍ | 27 |
| 5. ວິທີປູກໝາກກະທັນ | 34 |

ພິມທີ່ວິສາຫະກິດ ການພິມຈຳໜ່າຍສຶກສາ